EMC Emerging Markets Consulting

# ການປະເມີນຜົນກະທົບ ມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ ສຳລັບການນຳເຂົ້າຜະລິດຕະພັນສັດ (ໄກ່/ໝູ) ແລະ ອາຫານສັດ

ສຳລັບ

## ກົມລ້ຽງສັດ ແລະ ການປະມົງ, ກະຊວງ ກະສິກຳ ແລະ ປ່າໄມ້

## ບົດລາຍງານສຸດທ້າຍ

ກັນຍາ 2018

Emerging Markets Consulting

# ສາລະບານ


1 ສະຫຼຸບ ແລະ ສັງລວມຫຍໍ້ ........ 3

1.1 ຜະລິດຕະພັນກ່ຽວກັບສັດ (ໄກ່ ແລະ ໝູ) ........ 3

1.2 ອາຫານສັດ ........ 3

2 ຂໍ້ສະເໜີແນະ ........ 4

3 ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ ຂອງການປ່ຽນແປງ ........ 6

4 ການວິເຄາະ ມາດຕະການ NTMs ........ 7

4.1 ສະພາບລວມ ........ 7

4.2 ມາດຕະການ NTMs ........ 7

4.3 ຂໍ້ມູນການນຳເຂົ້າ, ປີ 2017 ........ 9

4.4 ຂັ້ນຕອນ ........ 10

4.5 ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ ........ 12

4.6 ການວິເຄາະຄວາມສ່ຽງ ........ 12

4.7 ການຫຼຸດຜ່ອນຄວາມສ່ຽງ ........ 14

ເອກະສານຊ້ອນທ້າຍ A: ບັນດານິຕິກຳ ແລະ ລະບຽບການທີ່ຕິດພັນກຸ່ມມາດຕະການ NTMs ........ 19

ເອກະສານຊ້ອນທ້າຍ B: ລາຍຊື່ຂະແໜງການທີ່ຖືກສຳພາດ ........ 19

ເອກະສານຊ້ອນທ້າຍ C: ລາຍການ ແລະ ລະຫັດສິນຄ້າ (HS) ........ 19

# 1 ສະຫຼຸບ ແລະ ສັງລວມຫຍໍ້

- ຜູ້ຄ້າສ່ວນໃຫຍ່ ແມ່ນບໍ່ປະຕິບັດຕາມກຸ່ມມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ (NTM), ເພາະສະນັ້ນ ມັນຈຶ່ງບໍ່ມີປະສິດທິພາບ ຕາມຈຸດປະສົງທີ່ຕ້ອງການປົກປ້ອງຜູ້ຊົມໃຊ້, ສະພາບແວດລ້ອມ ແລະ ເສດຖະກິດຂອງ ສປປ ລາວ. ບັນດາຜູ້ຄ້າຫຼີກລ້ຽງປະຕິບັດຕາມຂະບວນການ ຂອງມາດຕະການ NTMs ທັງໝົດ ໂດຍການນໍາເຂົ້າສິນຄ້າ ຜ່ານດ່ານປະເພນີ.
- ຜູ້ທີ່ໃຫ້ສໍາພາດໄດ້ລາຍງານວ່າ ຂັ້ນຕອນດໍາເນີນການຕ່າງໆຢູ່ດ່ານຊາຍແດນແມ່ນປະຕິບັດຕາມຂໍ້ມູນທີ່ມີຢູ່ໃນສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ (Lao PDR Trade Portal). ເຖິງຢ່າງໃດກໍ່ຕາມ, ຍັງມີບາງຫົວໜ່ວຍທຸລະກິດທີ່ບໍ່ປະຕິບັດຕາມຂັ້ນຕອນດັ່ງກ່າວ ເຊິ່ງເຮັດໃຫ້ເກີດມີຄວາມຊັກຊ້າ.
- ການເກັບຄ່າທໍານຽມທີ່ບໍ່ເປັນທາງການ (ບໍ່ມີໃບບິນ) ໃນແຕ່ລະຂັ້ນຕອນຂອງມາດຕະການ NTMs ເຮັດໃຫ້ຄວາມຕັ້ງໃຈຂອງຜູ້ຄ້າ ແລະ ນັກລົງທຶນຕ່າງປະເທດ ໃນການປະຕິບັດຕາມມາດຕະການດັ່ງກ່າວ ຫຼຸດລົງ.
- ການຄ້າທີ່ຜິດກົດໝາຍ ແມ່ນສ້າງຄວາມຫຍຸ້ງຍາກ ໃຫ້ແກ່ຂະບວນການບັງຄັບໃຊ້ມາດຕະການ NTMs.
- ທຸກພາກສ່ວນ ເປັນເອກະພາບກັນວ່າ ຂໍ້ມູນການຄ້າຂອງຂະແໜງພາສີໄດ້ສະແດງໃຫ້ເຫັນເຖິງການຫຼີກລ້ຽງການຂໍໃບອະນຸຍາດນໍາເຂົ້າຈາກຂະແໜງການກ່ຽວຂ້ອງ. ການປັບປຸງມາດຕະການ NTMs ແມ່ນບາດກ້າວສໍາຄັນຫຼາຍໃນການແກ້ໄຂບັນຫາຊໍ້າເຮື້ອດັ່ງກ່າວ.

## 1.1 ຜະລິດຕະພັນກ່ຽວກັບສັດ (ໄກ່ ແລະ ໝູ)

- ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດມາດຕະການ NTMs ແມ່ນສູງ. ມີຜູ້ຄ້າຢ່າງໜ້ອຍຈໍານວນ 79 ຫົວໜ່ວຍທຸລະກິດໄດ້ຮັບຜົນກະທົບ ແລະ ມາດຕະການ NTMs ເຫຼົ່ານີ້ ເພີ່ມຄ່າໃຊ້ຈ່າຍໃຫ້ແກ່ຜູ້ຄ້າ ສະເລ່ຍທັງໝົດ 312 ລ້ານກີບ ຫາ 1 ຕື້ກີບຕໍ່ປີ.
- ໂດຍລວມແລ້ວ, ການຈັດອັດຕາຄວາມສ່ຽງມາດຕະການ NTMs ຂອງຜະລິດຕະພັນສັດ (ໄກ່ ແລະ ໝູ) ແມ່ນຢູ່ໃນລະດັບສູງ - ໝາຍຄວາມວ່າ ມີຄວາມຈໍາເປັນໃນການນໍາໃຊ້ລະບຽບການສໍາລັບສິນຄ້າເຫຼົ່ານີ້, ແຕ່ບໍ່ລວມເຖິງຄ່າໃຊ້ຈ່າຍຂອງລະບອບໃນປະຈຸບັນ.
- ການຂໍໃບອະນຸຍາດນໍາເຂົ້າ ແມ່ນບໍ່ໄດ້ຫຼຸດຜ່ອນຄວາມສ່ຽງທີ່ເກີດຈາກສິນຄ້າເຫຼົ່ານີ້ຢ່າງພຽງພໍ.

## 1.2 ອາຫານສັດ

- ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດມາດຕະການ NTMs ແມ່ນສູງ. ມີຜູ້ຄ້າຢ່າງໜ້ອຍຈໍານວນ 129 ຫົວໜ່ວຍທຸລະກິດໄດ້ຮັບຜົນກະທົບ ແລະ ມາດຕະການ NTMs ເຫຼົ່ານີ້ ເພີ່ມຄ່າໃຊ້ຈ່າຍໃຫ້ແກ່ຜູ້ຄ້າ ສະເລ່ຍທັງໝົດ 463 ລ້ານກີບ ຫາ 1.6 ຕື້ກີບຕໍ່ປີ.
- ໂດຍລວມແລ້ວ, ການຈັດອັດຕາຄວາມສ່ຽງມາດຕະການ NTMs ຂອງອາຫານສັດ ແມ່ນຕໍ່າ - ໝາຍຄວາມວ່າ ຄວາມຈໍາເປັນໃນການນໍາໃຊ້ລະບຽບການສໍາລັບສິນຄ້າເຫຼົ່ານີ້ ແມ່ນມີໜ້ອຍທີ່ສຸດ.
- ຄ່າໃຊ້ຈ່າຍຂອງການຂໍໃບອະນຸຍາດນໍາເຂົ້ານັ້ນ ແມ່ນບໍ່ສົມເຫດສົມຜົນ ໂດຍອີງໃສ່ຄວາມສ່ຽງທີ່ເກີດຈາກສິນຄ້າດັ່ງກ່າວ.

# 2 ຂໍ້ສະເໜີແນະ

## ຜະລິດຕະພັນສັດ (ໄກ່ ແລະ ໝູ)

| ລະຫັດ NTMs | ຊື່ ມາດຕະການ | ຂໍ້ສະເໜີປັບປຸງ | ເຫດຜົນ |
|---|---|---|---|
| 115 | ການອອກອະນຸຍາດ ນຳເຂົ້າ ສັດທີ່ບໍ່ແມ່ນ ແນວພັນ ແລະ ຜະລິດຕະພັນສັດ | ປັບປຸງ | ບໍ່ມີປະສິດທິພາບ, ສິ້ນເປືອງ, ບໍ່ຈຳເປັນ ສຳລັບສິນຄ້າທີ່ໄດ້ຈົດທະບຽນແລ້ວ. ທຸກການອອກອະນຸຍາດນຳເຂົ້າ ຄວນໄດ້ຮັບການລົບລ້າງ, ແຕ່ໃນໄລຍະສັ້ນນີ້ ແມ່ນຄວນຢຸດຕິການອອກໃບອະນຸຍາດສຳລັບສິນຄ້າທີ່ໄດ້ຜ່ານການຈົດທະບຽນ ແລ້ວ. |
| 509 | ການອອກໃບອະນຸ ຍາດສັດທີ່ເປັນແນວ ພັນ | ປັບປຸງ | ບໍ່ມີປະສິດທິພາບ, ສິ້ນເປືອງ, ບໍ່ຈຳເປັນ ສຳລັບສິນຄ້າທີ່ໄດ້ຈົດທະບຽນແລ້ວ. ທຸກການອອກອະນຸຍາດນຳເຂົ້າ ຄວນໄດ້ຮັບການລົບລ້າງ, ແຕ່ໃນໄລຍະສັ້ນນີ້ ແມ່ນຄວນຢຸດຕິການອອກໃບອະນຸຍາດສຳລັບສິນຄ້າທີ່ໄດ້ຜ່ານການຈົດທະບຽນ ແລ້ວ. |
| 282 | ການກຳນົດດ່ານຊາຍ ແດນນຳເຂົ້າ | ຮັກສາໄວ້ | ຕ້ອງມີການປະສານສົມທົບ ກັບ ເຈົ້າໜ້າທີ່ພາສີ ຢູ່ດ່ານທ້ອງຖິ່ນ ແລະ ປະເພນີ ເພື່ອຮັບປະກັນວ່າມາດຕະການນີ້ແມ່ນຖືກຈັດຕັ້ງປະຕິບັດຢ່າງເຂັ້ມງວດ. |
| 281 | ໃບຢັ້ງຢືນຈາກປະເທດ ຕົ້ນທາງ | ຮັກສາໄວ້ | ມີຄວາມສຳຄັນເພື່ອການຮັບປະກັນຄວາມປອດໄພຂອງສັດທີ່ນຳເຂົ້າ |
| 283 | ຄ່າທຳນຽມ ອອກອະນຸ ຍາດນຳເຂົ້າ | ປັບປຸງ | ລົບລ້າງຄ່າທຳນຽມ ສຳລັບມາດຕະການ NTMs ທີ່ຖືກລົບລ້າງ, ທຸກຄ່າທຳນຽມ ໃຫ້ສາມາດຊຳລະຜ່ານລະບົບແຈ້ງພາສີແບບປະຕູດຽວແຫ່ງຊາດລາວ (LNSW) |
| 115 | ການກວດກາ | ຮັກສາໄວ້ | ຄວາມສ່ຽງແມ່ນພຽງພໍ ທີ່ຈະຮຽກຮ້ອງໃຫ້ມີການກວດກາ |

## ອາຫານສັດ

| ລະຫັດ NTMs | ຊື່ ມາດຕະການ | ຂໍ້ສະເໜີປັບປຸງ | ເຫດຜົນ |
|---|---|---|---|
| 522 | ໃບຢັ້ງຢືນຄຸນນະພາບ ນຳເຂົ້າ | ປັບປຸງ | ຄວາມສ່ຽງແມ່ນພຽງພໍທີ່ຮັບປະກັນ ຜູ້ຄ້າໃຫ້ໄດ້ຮັບການຈົດທະບຽນ, ແຕ່ໃບອະ ນຸຍາດນຳເຂົ້າຄວນຖືກຍົກເລີກ |
| 465 | ຄ່າທຳນຽມ ອອກອະນຸ ຍາດນຳເຂົ້າ | ປັບປຸງ | ລົບລ້າງຄ່າທຳນຽມ ສຳລັບມາດຕະການ NTMs ທີ່ຖືກລົບລ້າງ, ທຸກຄ່າທຳນຽມ ໃຫ້ສາມາດຊຳລະຜ່ານລະບົບແຈ້ງພາສີແບບປະຕູດຽວແຫ່ງຊາດລາວ (LNSW) |
| 523 | ການກວດກາ | ຮັກສາໄວ້ | ຄວາມສ່ຽງແມ່ນພຽງພໍ ທີ່ຈະຮຽກຮ້ອງໃຫ້ມີການກວດກາ |

ໝາຍເຫດ: ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ ຂອງຂໍ້ສະເໜີປັບປຸງນີ້ ແມ່ນຢູ່ໃນພາກທີ 3.

- ໃບອະນຸຍາດນຳເຂົ້າ ທີ່ອອກໃຫ້ໂດຍຂັ້ນແຂວງ ຄວນຖືກລົບລ້າງ ສຳລັບສິນຄ້າທີ່ໄດ້ຮັບການອອກອະນຸຍາດນຳເຂົ້າ ຈາກກົມລ້ຽງສັດ ແລະ ການປະມົງ ແລ້ວ.
- ຄ່າທຳນຽມທີ່ຕິດພັນກັບມາດຕະການ NTMs ທັງໝົດ ຄວນໃຫ້ຊຳລະໂດຍຜ່ານລະບົບເອເລັກໂຕຣນິກ ໂດຍການໂອນທາງທະນາຄານ ຫຼື ບັດເດບິດ (Debit card).
- ຜູ້ຄ້າ ຄວນນຳໃຊ້ລະບົບ LNSW ເພື່ອຂໍອະນຸຍາດນຳເຂົ້າ. ທັງນີ້, ເພື່ອຫຼີກລ້ຽງໂອກາດໃນການຮຽກເກັບຄ່າທຳນຽມທີ່ບໍ່ເປັນທາງການ ແລະ ເຮັດໃຫ້ຜູ້ຄ້າ ຫຼຸດຜ່ອນເວລາໃນການຂໍອະນຸຍາດນຳເຂົ້າ.

- ຂະແໜງການທີ່ກ່ຽວຂ້ອງຢູ່ດ່ານຊາຍແດນ ຄວນເກັບຄ່າທຳນຽມ ຕາມທີ່ໄດ້ລະບຸໃນລັດຖະບັນຍັດຂອງປະທານປະເທດ ເລກທີ 003/ປປທ ເທົ່ານັ້ນ. ອັດຕາຄ່າທຳນຽມຕ່າງໆ ຄວນມີການເຜີຍແຜ່ໃຫ້ສາທາລະນະຊົນຮັບຮູ້ ຢູ່ດ່ານຊາຍແດນຕ່າງໆ ແລະ ເປັນລະບົບອອນໄລນ໌ ເຊິ່ງຈະເຮັດໃຫ້ບັນດາຜູ້ຄ້າ ຮັບຮູ້ເຖິງອັດຕາຄ່າທຳນຽມທີ່ເໝາະສົມ.
- ຂະແໜງພາສີ ຄວນປະຕິບັດລະບຽບຢ່າງເຂັ້ງຄັດ ເຊິ່ງບັນດາຜູ້ຄ້າທີ່ບໍ່ປະຕິບັດຕາມຂະບວນການຂອງມາດຕະການ NTMs ຈະບໍ່ໄດ້ຮັບອະນູຍາດນຳເຂົ້າສິນຄ້າ. ເຖິງແມ່ນວ່າ, ຂະແໜງການອື່ນໆ ທີ່ປະຈຳຢູ່ດ່ານຊ່າຍແດນ ປະຕິບັດບັນດາລະບຽບການທັງໝົດຢ່າງເຂັ້ມງວດ, ມາດຕະການ NTMs ເຫຼົ່ານີ້ຈະບໍ່ມີຜົນກະທົບຫຍັງເລີຍ ຖ້າຫາກຂະແໜງພາສີ ບໍ່ບັງຄັບໃຊ້ລະບຽບການດັ່ງກ່າວ ເພາະເປັນຂະແໜງການທີ່ເປັນຂອດສຸດທ້າຍ ກ່ອນການປ່ອຍສິນຄ້າເຂົ້າມາໃນ ສປປ ລາວ.

- ບັນດາພາກລັດ ແລະ ຜູ້ຄ້າ ສະແດງຄວາມບໍ່ເພິ່ງພໍໃຈກັບບາງປະເພດສິນຄ້າທີ່ຍັງບໍ່ທັນມີຄວາມຊັດເຈນວ່າ ຂະແໜງການໃດມີອຳນາດໃນການຕັດສິນ ແລະ ຍັງແນະນຳອີກວ່າ ອຳນາດດັ່ງກ່າວຄວນໄດ້ຮັບການສ້າງຕັ້ງ ແລະ ເຜີຍແຜ່ ສູ່ສາທາລະນະຊົນຢ່າງກວ້າງຂວາງ. ມາດຕະການ NTMs ຄວນຖືກສ້າງຂຶ້ນໃໝ່ເພື່ອມອບຄວາມຮັບຜິດຊອບໃຫ້ກົມທີ່ເໝາະສົມທີ່ສຸດ ໃນການຄຸ້ມຄອງສິນຄ້າຢ່າງລະອຽດ. ກະຊວງກະສິກຳ ແລະ ປ່າໄມ້ (ກົມລ້ຽງສັດ ແລະ ການປະມົງ) ແລະ ກະຊວງສາທາລະນະສຸກ (ກົມອາຫານ ແລະ ຢາ) ທັງສອງກະຊວງ ແມ່ນມີບົດບັນທຶກຄວາມເຂົ້າໃຈ ກ່ຽວກັບສິນຄ້າ ແລະ ບົດບາດ ທີ່ຕົນຮັບຜິດຊອບເປັນທີ່ຮຽບຮ້ອຍແລ້ວ, ແຕ່ວ່າໃນທາງປະຕິບັດຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ເຊິ່ງອາດເປັນຍ້ອນຄວາມຮູ້ຂອງພະນັກງານ ຫຼື ການເຜີຍແຜ່ຂໍ້ມູນຂ່າວສານ ຍັງບໍ່ທົ່ວເຖິງ.

ຂໍ້ແນະນຳອື່ນໆ ຈາກຜູ້ໃຫ້ສຳພາດ:

- ເຈົ້າໜ້າທີ່ລັດລາຍງານວ່າ ປະຈຸບັນສິ່ງອຳນວຍຄວາມສະດວກ ສຳລັບໜ່ວຍງານສັດຕະວະແພດຢູ່ດ່ານຊາຍແດນ ແມ່ນບໍ່ມີຄວາມປອດໄພ ແລະ ບໍ່ມີປະສິດທິພາບພຽງພໍ.
- ຜູ້ຄ້າ ແລະ ເຈົ້າໜ້າທີ່ລັດ ຮຽກຮ້ອງໃຫ້ຫ້ອງການຕ່າງໆ ທີ່ໃຊ້ໃນການຄຸ້ມຄອງການນຳເຂົ້າ ຄວນຕັ້ງຢູ່ອາຄານດຽວກັນ ຢູ່ຕາມດ່ານຊາຍແດນ.

- ຜູ້ຄ້າໄດ້ຮ້ອງຂໍວ່າ ການກວດກາສິນຄ້າຂອງຂະແໜງການກ່ຽວຂ້ອງຢູ່ດ່ານ ຄວນເກີດຂຶ້ນພ້ອມກັນຄັ້ງດຽວ ໂດຍຊ້ອງໜ້າກັນລະຫວ່າງເຈົ້າໜ້າທີ່ທີ່ຕາງໜ້າຈາກບັນດາຂະແໜງການກ່ຽວຂ້ອງຢູ່ດ່ານຊາຍແດນ ໂດຍສະເພາະຖ້າເປັນສິນຄ້າທີ່ຕ້ອງເປີດ ແລະ ໜີບກົ່ວຄືນໃໝ່. ຍ້ອນວ່າ ປະຈຸບັນບັນດາຂະແໜງການຢູ່ດ່ານ ຕ້ອງການກວດກາສິນຄ້າໃນຫຼາຍເຫດຜົນທີ່ແຕກຕ່າງກັນ ເຊິ່ງເພີ່ມຂອດຂັ້ນ ແລະ ຄ່າໃຊ້ຈ່າຍ ໃຫ້ແກ່ຜູ້ຄ້າ.
- ມີການຝຶກອົບຮົມ ແລະ ສ້າງຄວາມຕື່ນຕົວໃຫ້ແກ່ເຈົ້າໜ້າທີ່ລັດ ແລະ ຜູ້ຄ້າ ເພື່ອໃຫ້ເຂົ້າໃຈເຖິງຂໍ້ມູນຂະບວນການທາງດ້ານການຄ້າທີ່ທັນຍຸກ ທັນເຫດການທີ່ສຸດ ໃນເວັບໄຊທ໌ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ.
- ນອກຈາກຫ້ອງທົດລອງ ຢູ່ນະຄອນຫຼວງວຽງຈັນແລ້ວ, ຜູ້ຄ້າຮຽກຮ້ອງໃຫ້ມີຫ້ອງທົດລອງສິນຄ້າ (ສຳລັບການຈົດທະບຽນສິນຄ້າ) ເພີ່ມອີກ ຢູ່ພາກເໜືອ ແລະ ພາກໃຕ້.

## 3 ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ ຂອງການປ່ຽນແປງ

ຖ້າຂໍ້ສະເໜີແນະຂ້າງເທິງ ຫາກຖືກປະກາດໃຊ້, ຄ່າໃຊ້ຈ່າຍ ແລະ ຜົນປະໂຫຍດ ຂອງການປ່ຽນແປງ ຈະມີດັ່ງລຸ່ມນີ້:

- ປັບປຸງຄວາມແນ່ນອນທາງທຸລະກິດ ແລະ ຄວາມໂປ່ງໃສ ຂອງລັດຖະບານ, ສິ່ງຜົນໃຫ້ມີການປັບປຸງໃນການຈັດອັນດັບຄວາມສາມາດໃນການແຂ່ງຂັນສາກົນ ແລະ ການຈັດອັນດັບຄວາມສະດວກໃນການດຳເນີນທຸລະກິດ ຂອງ ສປປ ລາວ.
- ຊ່ວຍໃຫ້ຜູ້ຄ້າ ຜະລິດຕະພັນສັດ (ໄກ່/ໝູ) ຫຼຸດຜ່ອນຄ່າໃຊ້ຈ່າຍໄດ້ເຖິງ 48 ຫາ 120 ລ້ານກີບ ຕໍ່ປີ ສຳລັບການອອກອະນຸຍາດນຳເຂົ້າ.
- ຊ່ວຍໃຫ້ຜູ້ຄ້າ ອາຫານສັດ ຫຼຸດຜ່ອນຄ່າໃຊ້ຈ່າຍໄດ້ເຖິງ 71 ຫາ 177 ລ້ານກີບ ຕໍ່ປີ ສຳລັບການອອກອະນຸຍາດນຳເຂົ້າ.
- ລັດຖະບານ ຈະສູນເສຍລາຍຮັບ ໃນການອອກໃບອະນູຍາດນຳເຂົ້າຜະລິດຕະພັນສັດ (ໄກ່/ໝູ) ແລະ ອາຫານສັດ ໄດ້ເຖິງ 119 ຫາ 297 ລ້ານກີບ ອີງຕາມຈຳນວນຂອງການອອກໃບອະນູຍາດ ໃນແຕ່ລະປີ.
- ຫຼຸດຜ່ອນມູນຄ່າສິນຄ້າໃຫ້ກັບຜູ້ຊົມໃຊ້ ເນື່ອງຈາກຄວາມສາມາດໃນການແຂ່ງຂັນ ແລະ ຄວາມຫຼາກຫຼາຍ ຂອງສິນຄ້າໄດ້ຮັບການປັງປຸງ.
- ຫຼຸດຜ່ອນ ການສວຍໃຊ້ການຄ້າທີ່ຖືກກົດໝາຍ ເຂົ້າໃນການສ້າງສິ່ງກີດຂວາງ ແລະ ຮຽກເກັບຄ່າທຳນຽມ ທີ່ບໍ່ເປັນທາງການ.

# 4 ການວິເຄາະ ມາດຕະການ NTMs

## 4.1 ສະພາບລວມ

ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ມອບໝາຍໃຫ້ ບໍລິສັດທີ່ປຶກສາ EMC ດໍາເນີນການປະເມີນຜົນກະທົບ ຂອງມາດຕະການ NTMs ສໍາລັບການອອກອະນຸຍາດນໍາເຂົ້າ ຜະລິດຕະພັນສັດ ແລະ ອາຫານສັດ. ຈຸດປະສົງ ແມ່ນເພື່ອກໍານົດວ່າ ປະຈຸບັນມາດຕະການ NTMs ໄດ້ຖືກປະຕິບັດຢ່າງສົມເຫດສົມຜົນ ແລະ ມີປະສິດທິພາບ ຫຼື ບໍ່? ແລະ ຊອກຫາທາງເລືອກອື່ນທີ່ມີປະສິດທິພາບກວ່າ.

ຄະນະທີມງານປະເມີນ ປະກອບມີ ທ່ານ Matt van Roosmalen, ທີ່ປຶກສາໂຄງການ, ທ່ານ ພູຕາວັນ ສີທໍາມະວັນ, ຫົວໜ້າທີມງານ, ທ່ານ ນາງ ລັດດາມອນ ພົດສະຫວ່າງ ແລະ ທ່ານ ປະສິດ ໄຜ່ລ້ອມ, ນັກວິເຄາະຂໍ້ມູນ. ທີ່ປຶກສາໂຄງການ ຮັບຜິດຊອບການບໍລິຫານໂຄງການ, ປະເມີນ ແລະ ກວດສອບ ຂໍ້ມູນປະຖົມພູມ ແລະ ທຸຕິຍະພູມ ແລະ ການວິເຄາະຂໍ້ມູນ ພ້ອມທັງມີສ່ວນ ຮ່ວມໃນການຂຽນບົດລາຍງານ. ຫົວໜ້າທີມ ຮັບຜິດຊອບຊີ້ນໍານັກວິເຄາະຂໍ້ມູນເພື່ອດໍາເນີນການວິເຄາະ ແລະ ເກັບກໍາຂໍ້ມູນປະຖົມພູມ ແລະ ທຸຕິຍະພູມ ມີສ່ວນຮ່ວມໃນການຂຽນບົດລາຍງານ.

ຂໍ້ມູນປະຖົມພູມທີ່ຖືກນໍາໃຊ້ໃນບົດລາຍງານສະບັບນີ້ ແມ່ນໄດ້ມາຈາກການສໍາພາດຜູ້ຕາງໜ້າຈາກ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ພະນັກງານລັດ ເຈົ້າໜ້າທີ່ພາກລັດ ທັງໃນຂະແໜງລ້ຽງສັດ ແລະ ການປະມົງ, ເຈົ້າໜ້າທີ່ປະຈໍາດ່ານ (ເຈົ້າໜ້າທີ່ສັດຕະວະແພດ) ຈາກພະແນກກະສິກໍາ ແລະ ປ່າໄມ້ ແຂວງ ຫຼວງນໍ້າທາ, ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ ແລະ ນະຄອນຫຼວງວຽງຈັນ. ພວກເຮົາ, ຍັງໄດ້ໂອ້ລົມກັບບັນດາຜູ້ຄ້າພາກເອກະຊົນຢູ່ແຕ່ລະແຂວງ. ລາຍລະອຽດຂອງຜູ້ໃຫ້ສໍາພາດ ໄດ້ລະບຸຢູ່ **<u>ເອກະສານຊ້ອນທ້າຍ B</u>** ຂອງບົດລາຍງານສະບັບນີ້. ສ່ວນຂໍ້ມູນທຸຕິຍະພູມ ແມ່ນໄດ້ມາຈາກສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (Lao Trade Portal).

## 4.2 ມາດຕະການ NTMs

ບົດລາຍງານສະບັບນີ້ ກວມເອົາມາດຕະການ NTMs ຂອງການນໍາເຂົ້າຜະລິດຕະພັນສັດ ແລະ ອາຫານສັດ ໂດຍສະເພາະແມ່ນ ໄກ່, ໝູ ແລະ ອາຫານສັດທຸກຊະນິດ.

ຈຸດປະສົງ ຂອງລະບຽບການທີ່ໄດ້ວາງອອກ ໃນມາດຕະການ NTMs ມີດັ່ງລຸ່ມນີ້:

ອີງຕາມລາຍລະອຽດ ຂອງມາດຕະການ NTMs ແຕ່ລະອັນ ແລະ ຈຸດປະສົງຂອງລະບຽບການທີ່ໄດ້ວາງອອກ, ກຸ່ມມາດຕະການ NTMs ຂອງ **ຜະລິດຕະພັນສັດ** ແມ່ນມີເປົ້າໝາຍເພື່ອປົກປ້ອງຜູ້ຊົມໃຊ້ໃນ ສປປ ລາວ, ປ້ອງກັນການແຜ່ລະບາດຂອງເຊື້ອພະຍາດທີ່ເກີດຈາກສັດ ແລະ ໃຫ້ສາມາດເຝົ້າລະວັງສິນຄ້າທີ່ເປັນອັນຕະລາຍໃນກໍລະນີເກີດການລະບາດ. ມາດຕະການ NTMs ເຫຼົ່ານີ້ ຍັງສ້າງລາຍຮັບເຂົ້າລັດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ.

ພ້ອມນີ້, ກຸ່ມມາດຕະການ NTMs ຂອງ **ອາຫານສັດ** ແມ່ນມີເປົ້າໝາຍເພື່ອຮັບປະກັນຄວາມປອດໄພຜະລິດຕະພັນທີ່ເປັນອາຫານສັດ ເພື່ອເພີ່ມຄວາມສາມາດໃນການລ້ຽງສັດ ແລະ ສຸຂະພາບຂອງສັດໃນ ສປປ ລາວ. ພ້ອມດຽວກັນ, ມາດຕະການ NTMs ເຫຼົ່ານີ້ ຍັງສ້າງລາຍຮັບເຂົ້າລັດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ.

ກຸ່ມມາດຕະການ NTMs ທີ່ຈັດຕັ້ງປະຕິບັດໃນປະຈຸບັນ ໄດ້ຖືກປະເມີນໃນບົດລາຍງານສະບັບນີ້ ແລະ ບັນດາລະບຽບການຕ່າງໆ ໄດ້ລະບຸຢູ່**<u>ເອກະສານຊ້ອນທ້າຍ A</u>** ຂອງບົດລາຍງານ.

### ຕາຕະລາງ 1: ກຸ່ມມາດຕະການ NTMs ທີ່ພົວພັນກັບການນຳເຂົ້າ ຜະລິດຕະພັນກ່ຽວກັບສັດ

| ລະຫັດ NTMs | ມາດຕະການ | ລາຍລະອຽດ |
|---|---|---|
| 115 | ການອອກໃບອະນຸຍາດນຳເຂົ້າ | ເພື່ອນຳເຂົ້າສັດທີ່ບໍ່ແມ່ນແນວພັນ, ຜະລິດຕະພັນກ່ຽວກັບສັດ ແລະ ຊິ້ນສ່ວນຕ່າງໆຂອງສັດ, ຜູ້ນຳເຂົ້າຕ້ອງໄດ້ປະກອບໃບຄຳຮ້ອງຢູ່ດ່ານທີ່ຈະນຳເຂົ້າ. |
| 509 | ການອອກໃບອະນຸຍາດນຳເຂົ້າ | ເພື່ອນຳເຂົ້າແນວພັນສັດ, ຫຼື ຜະລິດຕະພັນກ່ຽວກັບສັດ ແລະ ຊິ້ນສ່ວນຕ່າງໆຂອງສັດ, ຜູ້ນຳເຂົ້າຕ້ອງໄດ້ປະກອບໃບຄຳຮ້ອງໃຫ້ເຈົ້າໜ້າທີ່ຂັ້ນສູນກາງ (ກົມລ້ຽງສັດ ແລະ ການປະມົງ) |
| 282 | ການກຳນົດດ່ານຊາຍແດນນຳເຂົ້າ | ສັດເປັນ ແລະ ຜະລິດຕະພັນສັດ ຕ້ອງນຳເຂົ້າຜ່ານດ່ານຊາຍແດນທີ່ກຳນົດໃຫ້ໂດຍກົມທີ່ກ່ຽວຂ້ອງຂອງກະຊວງກະສິກຳ ແລະ ປ່າໄມ້ເທົ່ານັ້ນ ແລະ ອາດຈະກວດສອບທຸກຄັ້ງ. |
| 281 | ໃບຢັ້ງຢືນຈາກປະເທດຕົ້ນທາງ | ເພື່ອສະເໜີຂໍໃບອະນຸຍາດນຳເຂົ້າສັດເປັນ, ຜະລິດຕະພັນກ່ຽວກັບສັດ ແລະ ຊິ້ນສ່ວນຕ່າງໆຂອງສັດ, ຜູ້ຄ້າຕ້ອງປະກອບໃບຢັ້ງຢືນສຸຂະນາໄມສັດ ຈາກປະເທດສົ່ງອອກ ແລະ ແຈ້ງຕໍ່ກັບກົມທີ່ກ່ຽວຂ້ອງຂອງກະຊວງ ກະສິກຳ ແລະ ປ່າໄມ້. |
| 283 | ຄ່າທຳນຽມ ອອກອະນຸຍາດນຳເຂົ້າ | ຄ່າທຳນຽມ ໃນການອອກໃບອະນຸຍາດນຳເຂົ້າ ສຳລັບຜະລິດຕະພັນກ່ຽວກັບສັດແມ່ນ 25,000 ກີບ. |
| 115 | ການກວດກາ | ການນຳເຂົ້າສັດເປັນ, ຜະລິດຕະພັນສັດ ຫຼື ຊິ້ນສ່ວນຕ່າງໆຂອງສັດ ທັງໝົດ ໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ. |

ແຫຼ່ງທີ່ມາ: ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ (Lao PDR Trade Portal)

### ຕາຕະລາງ 2: ກຸ່ມມາດຕະການ NTMs ທີ່ພົວພັນກັບການນຳເຂົ້າ ອາຫານສັດ

| ລະຫັດ NTMs | ມາດຕະການ | ລາຍລະອຽດ |
|---|---|---|
| 522 | ໃບຢັ້ງຢືນຄຸນນະພາບ | ຜະລິດຕະພັນອາຫານສັດທີ່ນຳເຂົ້າ, ຜູ້ນຳເຂົ້າຕ້ອງມີໃບຢັ້ງຢືນຄຸນນະພາບ ທີ່ອອກໃຫ້ໂດຍກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ກ່ອນທີ່ສິນຄ້າຈະສາມາດນຳເຂົ້າມາໃນ ສປປ ລາວ. |
| 465 | ຄ່າທຳນຽມ ແລະ ຄ່າບໍລິການ | ຄ່າທຳນຽມສຳລັບການອອກໃບອະນຸຍາດນຳເຂົ້າສຳລັບອາຫານສັດ ແມ່ນ 25,000 ກີບ. |
| 523 | ການກວດກາ | ຜະລິດຕະພັນອາຫານສັດທີ່ນຳເຂົ້າ ຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ ຂອງຈາກກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ |

ແຫຼ່ງທີ່ມາ: ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ (Lao PDR Trade Portal)

### ຈຸດປະສົງຂອງກົດໝາຍ ແລະ ລະບຽບການ ໃນມາດຕະການ NTMs

ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດມາດຕະການ NTMs ແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ A.

### ຕາຕະລາງ 3: ຜະລິດຕະພັນສັດ

| ຈຸດປະສົງຂອງນິຕິກຳ ທີ່ໄດ້ວາງອອກ |
|---|
| ດຳລັດວ່າດ້ວຍ ການຄຸ້ມຄອງການເຄື່ອນຍ້າຍ ສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012 |
| ດຳລັດສະບັບນີ້ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ການເຄື່ອນຍ້າຍ ຢູ່ພາຍໃນປະເທດ, ນຳເຂົ້າ ແລະ ສົ່ງອອກສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຈຸດປະສົງເພື່ອປ້ອງກັນ ແລະ ສະກັດກັ້ນພະຍາດສັດ, ຮັບປະກັນຄວາມປອດໄພ ດ້ານສະບຽງອາຫານ ແລະ ປົກປັກຮັກສາສຸຂະພາບຂອງຄົນ, ສັດ ທັງເປັນການປະກອບສ່ວນພັດທະນາ ເສດຖະກິດ ແລະ ສັງຄົມຂອງຊາດ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ. |

ແຫຼ່ງທີ່ມາ: ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ (Lao Trade Portal)

### ຕາຕະລາງ 4: ອາຫານສັດ

| ຈຸດປະສົງຂອງນິຕິກຳ ທີ່ໄດ້ວາງອອກ |
|---|
| ຄຳສັ່ງ ຂອງ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການກວດກາ ແລະ ຄຸ້ມຄອງ ຄຸນນະພາບອາຫານສັດ ສະບັບເລກທີ 0369/ກປ.2005, ລົງວັນທີ 6 ພຶດສະພາ 2005 |
| … ເພື່ອສົ່ງເສີມຜະລິດຕະພັນອາຫານສັດພາຍໃນປະເທດ ແນໃສ່ການປັບປຸງທາງດ້ານຄຸນະພາບ ແລະ ປະລິມານ ເປັນການປະກອບສ່ວນເຂົ້າໃນການລ້ຽງສັດ ແລະ ການປະມົງ ຕອບສະໜອງການບໍລິໂພກພາຍໃນ ແລະ ການສົ່ງອອກ. |

ແຫຼ່ງທີ່ມາ: ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ (Lao PDR Trade Portal)

## 4.3 ຂໍ້ມູນການນຳເຂົ້າ, ປີ 2017

ເພື່ອສຳຫຼວດມູນຄ່າການນຳເຂົ້າສິນຄ້າ, ຈຳນວນ ການຂົນສົ່ງ ແລະ ບໍລິສັດ ທີ່ໄດ້ຮັບຜົນກະທົບຈາກມາດຕະການ NTMs, ພວກເຮົານຳໃຊ້ຂໍ້ມູນການຄ້າປີ 2017 ທີ່ສະໜອງໃຫ້ໂດຍກະຊວງອຸດສາຫະກຳ ແລະ ການຄ້າ ເຊິ່ງໄດ້ຈັດລາຍການທຸກໆການຂົນສົ່ງ ລວມທັງລະຫັດສິນຄ້າ (HS), ລະບອບໃບແຈ້ງພາສີ ແລະ ເລກຜູ້ປະຈຳຕົວຜູ້ເສຍອາກອນ. ຈາກນັ້ນ, ພວກເຮົາ ໄດ້ຄັດເລືອກເອົາການຂົນສົ່ງສິນຄ້ານຳເຂົ້າ ຕາມລະຫັດ HS ທີ່ໄດ້ຮັບຜົນກະທົບຈາກມາດຕະການ NTMs ເຂົ້າໃນການປະເມີນ ຄັ້ງນີ້.

### ຕາຕະລາງ 5: ການນຳເຂົ້າໃນ ສປປ ລາວ; ສັດ ແລະ ອາຫານສັດ; ປີ 2017

| ສິນຄ້າ | ມູນຄ່າສິນຄ້າ (ກີບ) | ຈຳນວນການຂົນສົ່ງ | ຈຳນວນບໍລິສັດ |
|---|---|---|---|
| ໝູ ແລະ ໄກ່ | 33,156,370,851 | 564 | 57 |
| ອາຫານສັດ | 436,061,718,502 | 4,927 | 129 |

ແຫຼ່ງທີ່ມາ: ກະຊວງອຸດສາຫະກຳ ແລະ ການຄ້າ.

ເອກະສານຊ້ອນທ້າຍ C ກຳນົດລາຍການສິນຄ້າທັງໝົດ ທີ່ພົວພັນກັບການຄົ້ນຄວ້າມາດຕະການ NTMs ໂດຍມີລະຫັດ HS ໃນລະດັບ 10 ຕົວເລກ. ເຖິງຢ່າງໃດກໍຕາມ, ຂໍ້ມູນການຄ້າຢູ່ໃນຕາຕະລາງຂ້າງເທິງ ຍັງລວມເອົາລະຫັດ HS ໃນລະດັບ 8 ຕົວເລກນຳ.

## 4.4 ຂັ້ນຕອນ

ຂັ້ນຕອນທີ່ນຳໃຊ້ໃນກຸ່ມມາດຕະການ NTMs ເຫຼົ່ານີ້ ແມ່ນປະຕິບັດຄືກັນກັບແຜນວາດຂ້າງລຸ່ມນີ້ ຍົກເວັ້ນບາງຜູ້ຄ້າລາຍງານວ່າ ຍັງມີຂໍ້ຮຽກຮ້ອງໃຫ້ເກັບຄ່າທຳນຽມທີ່ບໍ່ເປັນທາງການ ໃນຂັ້ນຕອນການຈົດທະບຽນສິນຄ້າ, ສະເໜີຂໍໃບອະນຸຍາດນຳເຂົ້າ ແລະ ການກວດກາສິນຄ້າ ໂດຍເຈົ້າໜ້າທີ່ກັກກັນສັດທີ່ກ່ຽວຂ້ອງ ປະຈຳດ່ານ. ເພື່ອຫຼີກລ້ຽງທຸກຂັ້ນຕອນຂອງມາດຕະການ NTMs, ຜູ້ຄ້າ ນຳເຂົ້າສິນຄ້າດັ່ງກ່າວ ຜ່ານດ່ານປະເພນີ, ນຳເຂົ້າເປັນຈຳນວນໜ້ອຍ, ແຈ້ງພາສີສິນຄ້ານຳເຂົ້າບໍລິໂພກ ເພື່ອການຊົມໃຊ້ສ່ວນຕົວ.

ເຈົ້າໜ້າທີ່ຈຳນວນໜຶ່ງ ຈາກກົມລ້ຽງສັດ ແລະ ການປະມົງ ຢູ່ຂັ້ນສູນກາງ ໄດ້ລາຍງານວ່າ ກົມໄດ້ອະນຸມັດໃບຢັ້ງຢືນທາງດ້ານເຕັກນິກໃຫ້ກັບຜູ້ຄ້າ ໂດຍບໍ່ຈຳເປັນຕ້ອງມີເອກະສານປະກອບຕ່າງໆ.

ຕາຕະລາງ 6: ຂະບວນການນຳເຂົ້າຂອງມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີຂອງ ຜະລິດຕະພັນ ສັດ ແລະ ອາຫານສັດ




ແຫຼ່ງທີ່ມາ: ສູນຂໍ້ມູນຂ່າວສານດ້ານການຄ້າຂອງ ສປປ ລາວ (Lao PDR Trade Portal)

ສິ່ງທີ່ສຳຄັນທີ່ໄດ້ຈາກການໂອ້ລົມ ກັບ ຜູ້ຄ້າໄດ້ໃຫ້ຮູ້ວ່າ ຜູ້ຄ້າທີ່ນຳເຂົ້າສັດ ແລະ ຜະລິດຕະພັນສັດ ແມ່ນບໍ່ໄດ້ປະຕິບັດຕາມຂະບວນການ ຂອງມາດຕະການ NTMs ໂດຍການນຳເຂົ້າຜ່ານດ່ານປະເພນີ ແລະ ມີການຊຳລະຄ່າທຳນຽມທີ່ບໍ່ເປັນທາງການ.

ສິ່ງທີ່ຫຍຸ້ງຍາກທີ່ສຸດ ແມ່ນຜູ້ຄ້າຕ້ອງໄດ້ເດີນທາງມາ ນະຄອນຫຼວງວຽງຈັນ ເພື່ອປະກອບເອກະສານຂໍໃບອະນຸຍາດດຳເນີນທຸລະກິດ. ຍ້ອນວ່າຫ້ອງທົດລອງສຳລັບການທົດສອບຕົວຢ່າງຂອງສິນຄ້າ ແມ່ນຕັ້ງຢູ່ນະຄອນຫຼວງວຽງຈັນ ພຽງແຫ່ງດຽວ ເພາະອຸປະກອນດັ່ງກ່າວແມ່ນມີລາຄາສູງ ສຳລັບລັດຖະບານທີ່ຈະຕ້ອງສ້າງຫ້ອງທົດລອງ ຢູ່ແຕ່ລະແຂວງ. ຜູ້ຄ້າໄດ້ແນະນຳວ່າ ຄວນມີຫ້ອງທົດລອງ ສາມ ແຫ່ງ ຢູ່ ພາກເໜືອ, ກາງ ແລະ ພາກໃຕ້ ແທນທີ່ຈະໃຊ້ພຽງແຕ່ຫ້ອງທົດລອງດຽວ ຢູ່ ນະຄອນຫຼວງວຽງຈັນ.

ຂໍ້ຮຽກຮ້ອງໃຫ້ມີການຂໍໃບອະນຸຍາດນຳເຂົ້າ ສຳລັບທຸກການນຳເຂົ້າ ເຮັດໃຫ້ຜູ້ຄ້າເສຍເວລາ ແລະ ສ້າງໂອກາດໃຫ້ແກ່ເຈົ້າໜ້າທີ່ໃນການຮຽກເກັບຄ່າທຳນຽມທີ່ບໍ່ເປັນທາງການ. ການນຳໃຊ້ລະບົບເອເລັກໂຕຣນິກ ສຳລັບການອອກໃບອະນຸຍາດນຳເຂົ້າ ສາມາດຫຼີກລ້ຽງໂອກາດໃນການຮຽກເກັບຄ່າທຳນຽມທີ່ບໍ່ເປັນທາງການ ແລະ ຫຼຸດຜ່ອນເວລາ ຂອງຜູ້ຄ້າໃນການຂໍໃບອະນຸຍາດນຳເຂົ້າ. ສິ່ງດັ່ງກ່າວ ຈະມີປະສິດທິພາບ ຖ້າລະບົບການອອກໃບອະນຸຍາດນຳເຂົ້າ ເປັນແບບເອເລັກໂຕຣນິກ ແລະ ໃຫ້ຜູ້ຄ້າ ສາມາດເລືອກຊຳລະຄ່າທຳນຽມທີ່ເປັນທາງການ ໂດຍຜ່ານບັດ ຫຼື ການໂອນ ທາງທະນາຄານ.

### 4.4.1 ຂັ້ນຕອນການປະຕິບັດຕົວຈິງ

ໃນ ສປປ ລາວ ມີການຄ້າສັດ ແລະ ຜະລິດຕະພັນສັດ ທີ່ມີຄວາມສັບສົນ ແລະ ຜິດກົດໝາຍ ເປັນຈຳນວນຫຼາຍ. ບໍລິສັດ ທີ່ບໍ່ປະຕິບັດຕາມຂະບວນການ ຂອງມາດຕະການ NTMs ສ່ວນຫຼາຍເປັນບໍລິສັດຂະໜາດໃຫຍ່ ທີ່ມີນັກລົງທຶນເປັນຊາວຕ່າງປະເທດ. ບໍລິສັດຂະໜາດນ້ອຍ ທີ່ມີແຮງກະຕຸ້ນທາງດ້ານການເງິນ ກໍ່ເລືອກນຳເຂົ້າສັດ ແລະ ຜະລິດຕະພັນສັດ ແບບຜິດກົດໝາຍ. ສິ່ງດັ່ງກ່າວ ເປັນອັນຕະລາຍໃຫ້ແກ່ຜູ້ຊົມໃຊ້, ເຮັດໃຫ້ລາຍຮັບໃນການເກັບອາກອນຂອງກະຊວງທີ່ກ່ຽວຂ້ອງຫຼຸດລົງ ແລະ ສ້າງຄວາມທໍ້ຖອຍໃຫ້ແກ່ບໍລິສັດໃໝ່ ທີ່ປະຕິບັດຕາມລະບຽບການນຳເຂົ້າສັດ ທີ່ຖືກຕ້ອງຕາມກົດໝາຍ.

ເຈົ້າໜ້າທີ່ກັກກັນສັດຢູ່ຂັ້ນແຂວງ ແມ່ນບໍ່ມີຄວາມເອົາໃຈໃສ່ໃນການຄວບຄຸມການນຳເຂົ້າສັດ ແລະ ຜະລິດຕະພັນສັດ ຢ່າງໃກ້ຊິດ, ເຊິ່ງສົ່ງຜົນໃຫ້ແກ່ເຈົ້າໜ້າທີ່ພາສີ ບໍ່ສາມາດກວດກາມາດຕະຖານຂອງສັດ ແລະ ຜະລິດຕະພັນສັດ ແລະ ສັດໄດ້ດີເທົ່າທີ່ຄວນ.

ອີງຕາມການສຳພາດກັບເຈົ້າໜ້າທີ່ລັດ ຈາກກົມລ້ຽງສັດ ແລະ ການປະມົງ, ແຜນວາດຂັ້ນຕອນ ທີ່ເຜີຍແຜ່ຢູ່ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ນັ້ນ ແມ່ນບໍ່ທັນໄດ້ຖືກປັບປຸງໃໝ່ ແລະ ບໍ່ໄດ້ສະທ້ອນໃຫ້ເຫັນທຸກຂັ້ນຕອນທີ່ເປັນທາງການ ທີ່ປະຕິບັດໃນປະຈຸບັນ.

ຜູ້ຄ້າສ່ວນໃຫຍ່ ບໍ່ມີຄວາມເພິ່ງພໍໃຈໃນການເດີນທາງມາ ນະຄອນຫຼວງວຽງຈັນ ເພື່ອສະເໜີຂໍອະນຸຍາດ ກ່ອນການນຳເຂົ້າທຸກຄັ້ງ ເຊິ່ງເປັນສາເຫດທີ່ເຮັດໃຫ້ຜູ້ຄ້າຈຳນວນຫຼາຍນຳເຂົ້າສິນຄ້າ ໂດຍບໍ່ປະຕິບັດຕາມຂະບວນການຂອງ ມາດຕະການ NTMs ຢ່າງຖືກຕ້ອງ.

ອີງຕາມການສຳພາດ ກັບ ເຈົ້າໜ້າທີ່ລັດ ແລະ ຜູ້ຄ້າຈຳນວນໜຶ່ງ, ຍັງມີຂັ້ນຕອນໜຶ່ງທີ່ສຳຄັນໃນກຸ່ມມາດຕະການ NTMs ທີ່ບໍ່ໄດ້ສະແດງຢູ່ໃນແຜນວາດ ຕາມເວັບໄຊທ໌ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ຄື: ແຜນວາດດັ່ງກ່າວ ບໍ່ໄດ້ກວມເອົາຂະບວນການສະເໜີຂໍໃບອະນຸຍາດນຳເຂົ້າ ແລະ ຄ່າທຳນຽມ. ນອກເໜືອຈາກນີ້, ຂັ້ນຕອນທີ່ໄດ້ສະແດງຕາມແຜນວາດ ສຳລັບກຸ່ມມາດຕະການ NTMs ແມ່ນຖືກຕ້ອງຕາມການປະຕິບັດຕົວຈິງ. ເຖິງຢ່າງໃດກໍ່ຕາມ, ບາງບໍລິສັດກໍ່ພົວພັນນຳເຈົ້າໜ້າທີ່ພາສີໂດຍກົງ ແລະ ເສຍຄ່າທຳນຽມທີ່ບໍ່ເປັນທາງການ, ໝາຍຄວາມວ່າ ບັນດາບໍລິສັດດັ່ງກ່າວ ບໍ່ເຄີຍປະຕິບັດຕາມຂັ້ນຕອນຂອງກຸ່ມມາດຕະການ NTMs. ພ້ອມນີ້, ຜູ້ຄ້າຈຳນວນໜຶ່ງໄດ້ລາຍງານວ່າ ພວກເຂົາໄດ້ຖືກຮຽກຮ້ອງໃຫ້ເສຍຄ່າທຳນຽມທີ່ບໍ່ເປັນທາງການໃນຂັ້ນຕອນການຈົດທະບຽນສິນຄ້າ, ການສະເໜີຂໍໃບອະນຸຍາດນຳເຂົ້າ ແລະ ການກວດສອບສິນຄ້າໂດຍ ເຈົ້າໜ້າທີ່ກັກກັນສັດ ຢູ່ດ່ານຊາຍແດນ.

ສິ່ງທີ່ສຳຄັນກໍ່ຄື ບາງບໍລິສັດ ໄດ້ຈ້າງບໍລິສັດອື່ນ (ນາຍໜ້າ) ເພື່ອດຳເນີນການປະກອບເອກະສານ ແລະ ຂັ້ນຕອນຕ່າງໆ ທີ່ຕິດພັນກັບມາດຕະການ NTMs ເພື່ອປະຢັດເວລາ ແລະ ຄ່າໃຊ້ຈ່າຍລົງ; ນາຍໜ້າເຫຼົ່ານີ້, ແມ່ນມີຄວາມຊໍານານຫຼາຍ ກ່ຽວກັບຂະບວນການ ຂອງກຸ່ມມາດຕະການ NTMs ແລະ ມີສາຍພົວພັນທີ່ດີ ກັບ ຂະແໜງການທີ່ກ່ຽວຂ້ອງ.

ຂໍ້ມູນທີ່ກ່ຽວຂ້ອງກັບຂັ້ນຕອນການປະຕິບັດຕົວຈິງ ຂອງກຸ່ມມາດຕະການ NTMs ແມ່ນໄດ້ຈາກເຈົ້າໜ້າທີ່ລັດ ຢູ່ກົມລ້ຽງສັດ ແລະ ການປະມົງ, ກະຊວງ ກະສິກຳ ແລະ ປ່າໄມ້; ຂະແໜງລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫຼວງນ້ຳທາ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະນະຄອນຫຼວງວຽງຈັນ. ພ້ອມດຽວກັນ, ເຈົ້າໜ້າທີ່ກັກກັນສັດປະຈຳດ່ານ ແລະ ຜູ້ຄ້າທີ່ດຳເນີນທຸລະກິດ ຢູ່ໃນ 05 ແຂວງດັ່ງກ່າວ ຍັງໄດ້ໃຫ້ສຳພາດ.

## 4.5 ຄ່າໃຊ້ຈ່າຍທີ່ບໍ່ເປັນທາງການ

40% ຂອງຜູ້ຄ້າທີ່ໃຫ້ສຳພາດ ໄດ້ຈ່າຍຄ່າທຳນຽມທີ່ບໍ່ເປັນທາງການ ຢູ່ຂັ້ນຕອນຂອງກຸ່ມມາດຕະການ NTMs ຂ້າງເທິງ. ຜູ້ຄ້າເຫຼົ່ານີ້ບໍ່ໄດ້ເຈາະຈົງເຖິງຈຳນວນຄ່າທຳນຽມທີ່ບໍ່ເປັນທາງການໃນຕົວຈິງ ທີ່ພວກເຂົາໄດ້ຈ່າຍໄປ, ສະນັ້ນ ຂໍ້ມູນສຳລັບກຸ່ມມາດຕະການ NTMs ດັ່ງກ່າວແມ່ນບໍ່ສາມາດປະເມີນໄດ້.

ຜູ້ຄ້າໄດ້ຊີ້ໃຫ້ເຫັນເຖິງວ່າ ບັນດາຜູ້ຄ້າສັດຂະໜາດນ້ອຍ, ໂດຍສະເພາະແມ່ນ ອາຫານທະເລ, ຜູ້ຄ້າ ນຳເຂົ້າໂດຍຜ່ານດ່ານຂະໜາດນ້ອຍ (ຫຼື “ດ່ານປະເພນີ”) ໄດ້ອ້າງວ່າສິນຄ້າດັ່ງກ່າວ ແມ່ນໃຊ້ສະເພາະສ່ວນບຸກຄົນ ຫຼື ເພື່ອບໍລິໂພກ. ການປະຕິບັດດັ່ງກ່າວ ແມ່ນເພື່ອຫຼີກລ້ຽງການກວດກາຂອງເຈົ້າໜ້າທີ່ພາສີ ແລະ ເສຍຄ່າທຳນຽມ ສຳລັບຜູ້ປະກອບການຂະໜາດນ້ອຍໃນການນຳເຂົ້າສັດ ແລະ ອາຫານທະເລໃນແຕ່ລະປີ.

ສິ່ງສຳຄັນກໍຄື ບາງຄັ້ງຜູ້ຄ້າ ເສຍຄ່າທຳນຽມທີ່ບໍ່ເປັນທາງການໃຫ້ແກ່ ສອງ ໜ່ວຍງານເທົ່ານັ້ນ ເພາະວ່າບັນດາກົມ ແມ່ນບໍ່ເຫັນດີໃຫ້ມີເຈົ້າໜ້າທີ່ຫຼາຍພາກສ່ວນພົວພັນ ກັບ ສິນຄ້າປະເພດດຽວກັນ. ຕົວຢ່າງ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມອາຫານ ແລະ ຢາ ອ້າງສິດໃນການຄຸ້ມຄອງການນຳເຂົ້າໄກ່ ຄືກັນ ເນື່ອງຈາກ ສິນຄ້າດັ່ງກ່າວສາມາດພິຈາລະນາເປັນໄດ້ທັງ ອາຫານ ຫຼື ຜະລິດຕະພັນ.

## 4.6 ການວິເຄາະຄວາມສ່ຽງ

ວິທີການວິເຄາະຄວາມສ່ຽງ ແມ່ນຖືກປະຕິບັດ ເພື່ອປະເມີນຜົນກະທົບ - ດ້ານບວກ ຫຼື ດ້ານລົບ - ຂອງການຮັກສາ, ປັບປຸງ ຫຼື ລຶບລ້າງບັນດາມາດຕະການ NTMs. ວຽກງານທຳອິດ, ແມ່ນການກຳນົດຄວາມສ່ຽງ ຂອງກຸ່ມມາດຕະການ NTMs ເພື່ອຊອກຫາວິທີແກ້ໄຂ. ໃນຕົວຢ່າງນີ້ ຄວາມສ່ຽງທີ່ຈະຖືກແກ້ໄຂໂດຍມາດຕະການ NTMs ແມ່ນຄວາມເປັນໄປໄດ້ຂອງພະຍາດລະບາດຈາກການນຳເຂົ້າສັດທີ່ມີຜົນກະທົບຕໍ່ຄົນ ຫຼື ສັດລ້ຽງອື່ນໆ ໃນ ສປປ ລາວ ແລະ ຄວາມເປັນໄປໄດ້ໃນການສົ່ງຜົນກະທົບດ້ານລົບ ຂອງການນຳເຂົ້າສັດຕໍ່ກັບຄວາມປອດໄພຂອງອາຫານ ແລະ/ຫຼື ການພັດທະນາເສດຖະກິດ ໃນ ສປປ ລາວ.

ຄວາມສ່ຽງ ໄດ້ຖືກປະເມີນໃນດ້ານຄວາມເປັນໄປໄດ້ ຂອງຄວາມສ່ຽງທີ່ຈະເກີດຂຶ້ນ ແລະ ລະດັບຄວາມຮຸນແຮງ ທີ່ອາດຈະຖືໄດ້ວ່າເປັນຜົນກະທົບຂອງຄວາມສ່ຽງ ທີ່ຄວນເກີດຂຶ້ນ.

ຂໍ້ຮຽກຮ້ອງ ທາງດ້ານນິຕິກຳທີ່ໄດ້ບັງຄັບໃຊ້ ແມ່ນບໍ່ຖືເປັນສ່ວນໜຶ່ງຂອງການປະເມີນຄວາມສ່ຽງ. ການປະເມີນຄວາມສ່ຽງ ແມ່ນການຊີ້ແຈງຢ່າງງ່າຍດາຍ ກ່ຽວກັບຄວາມສ່ຽງທີ່ຈະຖືກແກ້ໄຂ ແລະ ການປະເມີນປະສິດທິພາບ ຂອງການຄວບຄຸມໃນປະຈຸບັນ, ບໍ່ແມ່ນການປະກອບຄຳຄິດເຫັນ ຕໍ່ກັບຂໍ້ຮຽກຮ້ອງທາງດ້ານນິຕິກຳທີ່ໄດ້ບັງຄັບໃຊ້ ທີ່ໃຫ້ມີການຄວບຄຸມ.

ຕາຕະລາງຂ້າງລຸ່ມນີ້ ແມ່ນໃຊ້ເພື່ອປະເມີນຄະແນນຄວາມສ່ຽງເບື້ອງຕົ້ນ ສຳລັບຄວາມສ່ຽງທີ່ໄດ້ຖືກຊີ້ແຈງ (ອາດເປັນຜົນກະທົບດ້ານລົບຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ):

ຕາຕະລາງ 7: ຄວາມສ່ຽງ Matrix

| | ຄວາມຮຸນແຮງຂອງຜົນກະທົບ | | | | |
|---|---|---|---|---|---|
| **ຄວາມເປັນໄປໄດ້ ຂອງເຫດການ** | ຕໍ່າທີ່ສຸດ 1 | ຕໍ່າ 2 | ປານກາງ 3 | ສູງ 4 | ສູງທີ່ສຸດ 5 |
| ຕໍ່າທີ່ສຸດ 1 | 1 | 2 | 3 | 4 | 5 |
| ຕໍ່າ 2 | 2 | 4 | 6 | 8 | 10 |
| ປານກາງ 3 | 3 | 6 | 9 | 12 | 15 |
| ສູງ 4 | 4 | 8 | 12 | 16 | 20 |
| ສູງທີ່ສຸດ 5 | 5 | 10 | 15 | 20 | 25 |

| ອັດຕາຄວາມສ່ຽງສຳລັບມາດຕະການ NTMs |
|---|
| ຕໍ່າທີ່ສຸດ (1-5) |
| ຕໍ່າ(6-10) |
| ປານກາງ (11-15) |
| ສູງ (16-20) |
| ສູງທີ່ສຸດ (21-25) |

### 4.6.1 ມາດຕະການ NTMs ຂອງຜະລິດຕະພັນສັດ (ໄກ່ ແລະ ໝູ)

ຄວາມເປັນໄປໄດ້ ຂອງພະຍາດລະບາດຈາກສັດນຳເຂົ້າ ຕໍ່ຄົນ ຫຼື ສັດລ້ຽງອື່ນໆໃນ ສປປ ລາວ ແລະ ຄວາມເປັນໄປໄດ້ຂອງຜົນກະທົບດ້ານລົບຂອງການນຳເຂົ້າສັດຕໍ່ກັບຄວາມປອດໄພຂອງອາຫານ ແລະ/ຫຼື ການພັດທະນາເສດຖະກິດ ໃນ ສປປ ລາວ ແມ່ນຈັດຢູ່ລະດັບ **ສູງ.** ຂໍ້ມູນການຄ້າຈຳນວນໜຶ່ງ ສາມາດເກັບກຳ ຫຼື ສັງລວມໄດ້, ແຕ່ຍັງບໍ່ຄົບຖ້ວນ ແລະ ຫຍຸ້ງຍາກໃນການພິສູດ.

ຄວາມຮຸນແຮງຂອງຜົນກະທົບ ຂອງພະຍາດລະບາດຈາກສັດທີ່ນຳເຂົ້າຕໍ່ຄົນ ຫຼື ສັດລ້ຽງອື່ນໆໃນ ສປປ ລາວ ແລະ ຄວາມຮຸນແຮງຂອງຜົນກະທົບດ້ານລົບຂອງການນຳເຂົ້າສັດ ຕໍ່ກັບຄວາມປອດໄພຂອງອາຫານ ແລະ/ຫຼື ການພັດທະນາເສດຖະກິດ ໃນ ສປປ ລາວ ແມ່ນຈັດຢູ່ລະດັບ **ສູງທີ່ສຸດ.** ສັດທີ່ມີສານປົນເປື້ອນ ຫຼື ຕິດເຊື້ອພະຍາດ ອາດເປັນສາເຫດເຮັດໃຫ້ມີການສູນເສຍຊີວິດຂອງຄົນ ແລະ ສັດລ້ຽງໃນ ສປປ ລາວ.

ຜົນການສັງລວມ ຄວາມເປັນໄປໄດ້ ແລະ ຄວາມຮຸນແຮງ ສຳລັບຄວາມສ່ຽງທີ່ຈະເກີດຂຶ້ນ ໄດ້ຄິດໄລ່ເປັນ 20 (ຄວາມເປັນໄປໄດ້ ແມ່ນ 4 ຄູນກັບ ຄວາມຮຸນແຮງແມ່ນ 5) ເຮັດໃຫ້ອັດຕາຄວາມສ່ຽງລວມ ແມ່ນຈັດຢູ່ລະດັບ **ສູງ.**

### 4.6.2 ມາດຕະການ NTMs ຂອງອາຫານສັດ

ຄວາມເປັນໄປໄດ້ ຂອງພະຍາດລະບາດຈາກສັດນຳເຂົ້າ ຕໍ່ຄົນ ຫຼື ສັດລ້ຽງອື່ນໆໃນ ສປປ ລາວ ແລະ ຄວາມເປັນໄປໄດ້ຂອງຜົນກະທົບດ້ານລົບຂອງການນຳເຂົ້າອາຫານສັດ ຕໍ່ກັບຄວາມປອດໄພຂອງອາຫານ ແລະ/ຫຼື ການພັດທະນາເສດຖະກິດ ໃນ ສປປ ລາວ ແມ່ນຈັດຢູ່ລະດັບ **ຕໍ່າ.** ຂໍ້ມູນການຄ້າຈຳນວນໜຶ່ງ ສາມາດເກັບກຳ ຫຼື ສັງລວມໄດ້, ແຕ່ຍັງບໍ່ຄົບຖ້ວນ ແລະ ຫຍຸ້ງຍາກໃນການພິສູດ.

ຄວາມຮຸນແຮງຂອງຜົນກະທົບດ້ານລົບ ຂອງການນຳເຂົ້າຜະລິດຕະພັນອາຫານສັດທີ່ບໍ່ປອດໄພ ຕໍ່ກັບສຸຂະພາບຂອງຄົນ ແລະ ສັດ, ແລະ ຄວາມຮຸນແຮງຂອງຜົນກະທົບດ້ານລົບຕໍ່ກັບ ຄວາມປອດໄພຂອງອາຫານ ແລະ/ຫຼື ການພັດທະນາເສດຖະກິດ ໃນ ສປປ ລາວ ຈັດຢູ່

ລະດັບ **ປານກາງ.** ສັດທີ່ມີສານປົນເປື້ອນ ຫຼື ຕິດເຊື້ອພະຍາດ ອາດເປັນສາເຫດເຮັດໃຫ້ມີການສູນເສຍຊີວິດຂອງຄົນ ແລະ ສັດລ້ຽງໃນ ສປປ ລາວ.

ຜົນການສັງລວມ ຄວາມເປັນໄປໄດ້ ແລະ ຄວາມຮຸນແຮງ ສໍາລັບຄວາມສ່ຽງທີ່ຈະເກີດຂຶ້ນ ໄດ້ຄິດໄລ່ເປັນ 6 (ຄວາມເປັນໄປໄດ້ ແມ່ນ 2 ຄູນກັບ ຄວາມຮຸນແຮງ 3), ເຮັດໃຫ້ອັດຕາຄວາມສ່ຽງລວມ ແມ່ນຈັດຢູ່ລະດັບ **ຕໍ່າ.**

## 4.7 ການຫຼຸດຜ່ອນຄວາມສ່ຽງ

ເມື່ອອັດຕາຄວາມສ່ຽງເບື້ອງຕົ້ນໄດ້ຖືກປະເມີນ, ການຫຼຸດຜ່ອນຄວາມສ່ຽງປະຈຸບັນ ແມ່ນຖືກທຽບໃສ່ກັບຄ່າໃຊ້ຈ່າຍຂອງນໍາໃຊ້ມາດຕະການ NTMs.

### 4.7.1 ຜະລິດຕະພັນ ສັດ (ໄກ່ ແລະ ໝູ)

ມາດຕະການ NTMs ໃນປະຈຸບັນ ໄດ້ຊ່ວຍຫຼຸດຜ່ອນອັດຕາຄວາມສ່ຽງຂອງການນໍາເຂົ້າສັດ ແລະ ອາຫານສັດ ຈໍານວນໜຶ່ງ. ເຖິງຢ່າງໃດກໍ່ຕາມ, ມາດຕະການດັ່ງກາວ ແມ່ນບໍ່ມີປະສິດທິຜົນທັງໝົດ ແລະ ມີສ່ວນພົວພັນກັບຄ່າໃຊ້ຈ່າຍທີ່ສໍາຄັນ. ຕົວເລກການນໍາເຂົ້າສັດທີ່ບໍ່ໄດ້ຖືກແຈ້ງໃຫ້ຮູ້ນັ້ນ ແມ່ນການນໍາເຂົ້າຜ່ານດ່ານທີ່ບໍ່ເປັນທາງການ ເພື່ອຫຼີກລ້ຽງການກວດກາສິນຄ້າ ໃນແຕ່ລະປີ ເຊິ່ງເປັນການຫຼຸດຜ່ອນປະສິດທິພາບ ຂອງລະບອບມາດຕະການ NTMs.

ຕາມທິດສະດີແລ້ວ ຂໍ້ຮຽກຮ້ອງໃຫ້ມີການກວດກາສັດຂອງເຈົ້າໜ້າທີ່ສັດຕະວະແພດ ກ່ອນການແຈ້ງພາສີນໍາເຂົ້າເປັນການຫຼຸດຜ່ອນຄວາມສ່ຽງທີ່ດີ, ບັນດາເຈົ້າໜ້າທີ່ລັດ ແລະ ຜູ້ຄ້າ ໄດ້ລາຍງານວ່າ ຍັງມີຄວາມຂາດເຂີນດ້ານບຸກຄະລາກອນ ແລະ ສິ່ງອໍານວຍຄວາມສະດວກ ເຮັດໃຫ້ການຫຼຸດຜ່ອນຄວາມສ່ຽງດັ່ງກ່າວ ແມ່ນມີປະສິດຕິພາບໜ້ອຍລົງ.

ນອກນັ້ນ, ຂໍ້ຮຽກຮ້ອງໃຫ້ມີການອອກໃບອະນຸຍາດນໍາເຂົ້າ ແມ່ນບໍ່ໄດ້ບັນລຸເຫດຜົນທີ່ຕ້ອງການແກ້ໄຂຄວາມສ່ຽງຂອງມາດຕະການ NTMs. ຖ້າບໍລິສັດໄດ້ຂຶ້ນທະບຽນ, ຂໍ້ມູນການຄ້າທີ່ເກັບກໍາໂດຍເຈົ້າໜ້າທີ່ພາສີ, ໃບຢັ້ງຢືນສຸຂານາໄມຈາກປະເທດສົ່ງອອກ ໄດ້ປະກອບມາພ້ອມ ແລະ ການກວດກາຢູ່ດ່ານຊາຍແດນ ແລ້ວ, ໃບອະນຸຍາດນໍາເຂົ້າ ແມ່ນບໍ່ມີຈຸດປະສົງໃດຕໍ່ກັບການຫຼຸດຜ່ອນຄວາມສ່ຽງ.

### 4.7.2 ຄ່າໃຊ້ຈ່າຍ - ຜະລິດຕະພັນ ສັດ (ໄກ່ ແລະ ໝູ)

ຕາຕະລາງ 8 ສະແດງໃຫ້ເຫັນຄ່າທໍານຽມທີ່ເປັນທາງການ ສໍາລັບມາດຕະການ NTMs. ໂດຍທົ່ວໄປແລ້ວ, ບໍລິສັດ ຈະຊໍາລະຄ່າທໍານຽມ ສໍາລັບໃບອະນຸຍາດດໍາເນີນທຸລະກິດ*ທຸກໆ* 1 *ຫຼື* 2 *ປີ*ແລະ ສາມາດຕໍ່ທະບຽນໄດ້ໂດຍການສະໜອງຂໍ້ມູນທີ່ກ່ຽວຂ້ອງ. ຕາຕະລາງຂ້າງລຸ່ມນີ້ ໄດ້ສະແດງໃຫ້ເຫັນຄ່າໃຊ້ຈ່າຍທັງໝົດ ຂອງຜູ້ຄ້າໃນໜຶ່ງປີ ໃນການປະກອບຂໍໃບອະນຸຍາດຕ່າງໆ.

#### ຕາຕະລາງ 8: ລວມຄ່າທໍານຽມທີ່ເປັນທາງການ – ຜະລິດຕະພັນ ສັດ (ໄກ່ ແລະ ໝູ)

| | ຈໍານວນ | ຄ່າທໍານຽມ | ມູນຄ່າທັງໝົດ (ລ້ານ ກີບ) |
|---|---|---|---|
| ໃບອະນຸຍາດດໍາເນີນທຸລະກິດ (ທຸກໆ 1-2 ປີ) | 79 | 300,000-3,000,000 | 23.7-237 |
| ການກວດກາປະຈໍາດ່ານ | 2,400 | 100,000-300,000 | 240-720 |
| ຄ່າທໍານຽມໃບອະນຸຍາດນໍາເຂົ້າ | 2,400 | 20,000-50,000 | 48-120 |
| **ມູນຄ່າທັງໝົດ** | | | **311.7-1,077** |

ແຫຼ່ງທີ່ມາ: EMC ຕີລາຄາຕາມການສໍາພາດ ແລະ ຂໍ້ມູນທາງດ້ານການຄ້າ

ຄ່າໃຊ້ຈ່າຍຂອງການຈ້າງພະນັກງານເພື່ອໃຊ້ໃນການປະກອບເອກະສານຂໍໃບອະນຸຍາດ ແມ່ນມີລັກສະນະສະເພາະຂອງແຕ່ລະຫົວໜ່ວຍທຸລະກິດ ແຕ່ກໍ່ສາມາດປະເມີນໄດ້. ຄ່າໃຊ້ຈ່າຍສະເລ່ຍຂອງພະນັກງານໃນການປະກອບເອກະສານຂໍ ແລະ ນໍາໃຊ້ ໃບອະນຸຍາດແມ່ນອີງຕາມຕົວເລກແຮງງານຂັ້ນສະເລ່ຍ ທີ່ສະໜອງໃຫ້ໂດຍລັດຖະບານລາວ ໃນໜັງສືພິມວຽງຈັນໄທມ໌ (Vientiane Times) ວັນທີ 22 ມັງກອນ ປີ 2018.

ຜູ້ທີ່ມີຕໍາແໜ່ງໃນການອອກໃບອະນຸຍາດ ແລະ ການແຈ້ງເສຍພາສີ ແມ່ນຖືເປັນຕໍາແໜ່ງທີ່ມີຄວາມສາມາດລະດັບກາງ. ການຄາດຄະເນຄ່າໃຊ້ຈ່າຍຂອງຕໍາແໜ່ງເຫຼົ່ານີ້ ແມ່ນອີງຕາມຄ່າສະເລ່ຍຂອງແຮງງານຂັ້ນຕໍ່າ ແລະ ແຮງງານໃນຂະແໜງບໍລິການທີ່ມີຄວາມສາມາດລະດັບກາງ.

ການນໍາໃຊ້ຄ່າແຮງງານທີ່ສະໜອງໃຫ້ໂດຍລັດຖະບານ ເຮັດໃຫ້ພະນັກງານຄົນໜຶ່ງໄດ້ລາຍຮັບ ຕໍ່ ເດືອນແມ່ນ 1.8 ລ້ານກີບ. ຖ້າມື້ເຮັດວຽກສະເລ່ຍຕໍ່ເດືອນແມ່ນ 21-22 ວັນ ສາມາດຄິດໄລ່ເປັນລາຍຮັບ ຕໍ່ ວັນລັດຖະການປະມານ 85,000 ກີບ ສໍາລັບຄ່າແຮງພະນັກງານໂດຍກົງ.

### ຕາຕະລາງ 9: ຄ່າແຮງງານທັງໝົດ

| | ວັນ | ຄ່າແຮງງານ | ມູນຄ່າທັງໝົດ (ລ້ານ ກີບ) |
|---|---|---|---|
| **ລວມທັງໝົດ** | 7,185 | 85,000 | 610.725 |

ແຫຼ່ງທີ່ມາ: ການຕີລາຄາຂອງ EMC

ສະນັ້ນ, ລວມຄ່າທໍານຽມ ແລະ ຄ່າແຮງງານ ແມ່ນຢູ່ລະຫວ່າງ 922 ລ້ານ ຫາ 1.7 ພັນລ້ານກີບ.

### ຕາຕະລາງ 10: ຄ່າໃຊ້ຈ່າຍທັງໝົດ

| | ມູນຄ່າ (ລ້ານ ກີບ) |
|---|---|
| ຄ່າທໍານຽມທາງການ | 311.7-1,077 |
| ຄ່າແຮງງານ | 610.725 |
| **ມູນຄ່າທັງໝົດ** | **922.425-1,687.725** |

ແຫຼ່ງທີ່ມາ: ການຕີລາຄາຂອງ EMC

ຄ່າໃຊ້ຈ່າຍອື່ນໆທີ່ບໍ່ໄດ້ຖືກປະເມີນໃນຄັ້ງນີ້ ລວມມີ:

- ແຮງຈູງໃຈເພີ່ມເຕີມ ໃນການລັກລອບນໍາເຂົ້າ;
- ທຸລະກິດໃນ ສປປ ລາວ ມີທ່າແຮງໃນການແຂ່ງຂັນກັບສາກົນຕໍ່າ ເນື່ອງຈາກລາຄາຂອງສິນຄ້າສູງ. ພ້ອມນີ້, ຍັງມີສິ່ງກີດຂວາງໃຫ້ແກ່ການລົງທຶນສາກົນ;
- ການສູນເສຍປະສິດທິພາບທາງເສດຖະກິດ ແລະ ການບິດເບືອນອື່ນໆ ເນື່ອງຈາກລາຄາຂອງສິນຄ້າສູງ.

### 4.7.3 ອາຫານສັດ

ມາດຕະການ NTMs ໃນປະຈຸບັນ ໄດ້ຊ່ວຍຫຼຸດຜ່ອນອັດຕາຄວາມສ່ຽງຂອງການນໍາເຂົ້າສັດ ແລະ ອາຫານສັດ ຈໍານວນໜຶ່ງ. ເຖິງຢ່າງໃດກໍ່ຕາມ, ມາດຕະການດັ່ງກາວ ແມ່ນບໍ່ມີປະສິດທິຜົນທັງໝົດ ແລະ ມີສ່ວນພົວພັນກັບຄ່າໃຊ້ຈ່າຍທີ່ສໍາຄັນ. ຕົວເລກການນໍາເຂົ້າສັດ

ທີ່ບໍ່ໄດ້ຖືກແຈ້ງໃຫ້ຮູ້ນັ້ນ ແມ່ນການນຳເຂົ້າຜ່ານດ່ານທີ່ບໍ່ເປັນທາງການ ເພື່ອຫຼີກລ້ຽງການກວດກາສິນຄ້າ ໃນແຕ່ລະປີ ເຊິ່ງເປັນການຫຼຸດຜ່ອນປະສິດທິພາບ ຂອງລະບອບມາດຕະການ NTMs.

ຕາມທິດສະດີແລ້ວ ຂໍ້ຮຽກຮ້ອງໃຫ້ມີການກວດກາສັດຂອງເຈົ້າໜ້າທີ່ສັດຕະວະແພດ ກ່ອນການແຈ້ງພາສີນຳເຂົ້າເປັນການຫຼຸດຜ່ອນຄວາມສ່ຽງທີ່ດີ, ບັນດາເຈົ້າໜ້າທີ່ລັດ ແລະ ຜູ້ຄ້າ ໄດ້ລາຍງານວ່າ ຍັງມີຄວາມຂາດເຂີນດ້ານບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກ ເຮັດໃຫ້ການຫຼຸດຜ່ອນຄວາມສ່ຽງດັ່ງກ່າວ ແມ່ນມີປະສິດຕິພາບໜ້ອຍລົງ.

ນອກນັ້ນ, ຂໍ້ຮຽກຮ້ອງໃຫ້ມີການອອກໃບອະນຸຍາດນຳເຂົ້າ ແມ່ນບໍ່ໄດ້ບັນລຸເຫດຜົນທີ່ຕ້ອງການແກ້ໄຂຄວາມສ່ຽງຂອງມາດຕະການ NTMs. ຖ້າບໍລິສັດໄດ້ຂຶ້ນທະບຽນ, ຂໍ້ມູນການຄ້າທີ່ເກັບກຳໂດຍເຈົ້າໜ້າທີ່ພາສີ, ໃບຢັ້ງຢືນສຸຂານາໄມຈາກປະເທດສົ່ງອອກ ໄດ້ປະກອບມາພ້ອມ ແລະ ການກວດກາຢູ່ດ່ານຊາຍແດນ ແລ້ວ, ໃບອະນຸຍາດນຳເຂົ້າ ແມ່ນບໍ່ມີຈຸດປະສົງໃດຕໍ່ກັບການຫຼຸດຜ່ອນຄວາມສ່ຽງ.

### 4.7.4 ຄ່າໃຊ້ຈ່າຍ - ອາຫານສັດ

ຕາຕະລາງ 11 ສະແດງໃຫ້ເຫັນຄ່າທຳນຽມທີ່ເປັນທາງການ ສຳລັບມາດຕະການ NTMs. ໂດຍທົ່ວໄປແລ້ວ, ບໍລິສັດ ຈະຊຳລະຄ່າທຳນຽມ ສຳລັບໃບອະນຸຍາດດຳເນີນທຸລະກິດ*ທຸກໆ* 1 *ຫຼື* 2 *ປີ*ແລະ ສາມາດຕໍ່ທະບຽນໄດ້ໂດຍການສະໜອງຂໍ້ມູນທີ່ກ່ຽວຂ້ອງ. ຕາຕະລາງຂ້າງລຸ່ມນີ້ ໄດ້ສະແດງໃຫ້ເຫັນຄ່າໃຊ້ຈ່າຍທັງໝົດ ຂອງຜູ້ຄ້າໃນໜຶ່ງປີ ໃນການປະກອບຂໍໃບອະນຸຍາດຕ່າງໆ.

**ຕາຕະລາງ 11: ລວມຄ່າທຳນຽມທີ່ເປັນທາງການ – ອາຫານສັດ**

| | ຈຳນວນ | ຄ່າທຳນຽມ | ມູນຄ່າທັງໝົດ (ລ້ານ ກີບ) |
|---|---|---|---|
| ໃບອະນຸຍາດດຳເນີນທຸລະກິດ (ທຸກໆ 1-2 ປີ) | 129 | 300,000-3,000,000 | 38.7-387 |
| ການກວດກາປະຈຳດ່ານ | 3,536 | 100,000-300,000 | 353.6-1,060 |
| ຄ່າທຳນຽມໃບອະນຸຍາດນຳເຂົ້າ | 3,536 | 20,000-50,000 | 70.72-176.8 |
| **ມູນຄ່າທັງໝົດ** | | | **463.02-1,623.8** |

ແຫຼ່ງທີ່ມາ: EMC ຕີລາຄາຕາມການສຳພາດ ແລະ ຂໍ້ມູນທາງດ້ານການຄ້າ

ຄ່າໃຊ້ຈ່າຍຂອງການຈ້າງພະນັກງານເພື່ອໃຊ້ໃນການປະກອບເອກະສານຂໍໃບອະນຸຍາດ ແມ່ນມີລັກສະນະສະເພາະຂອງແຕ່ລະຫົວໜ່ວຍທຸລະກິດ ແຕ່ກໍ່ສາມາດປະເມີນໄດ້. ຄ່າໃຊ້ຈ່າຍສະເລ່ຍຂອງພະນັກງານໃນການປະກອບເອກະສານຂໍ ແລະ ນຳໃຊ້ ໃບອະນຸຍາດແມ່ນອີງຕາມຕົວເລກແຮງງານຂັ້ນສະເລ່ຍ ທີ່ສະໜອງໃຫ້ໂດຍລັດຖະບານລາວ ໃນໜັງສືພິມວຽງຈັນໄທມ໌ (Vientiane Times) ວັນທີ 22 ມັງກອນ ປີ 2018.

ຜູ້ທີ່ມີຕຳແໜ່ງໃນການອອກໃບອະນຸຍາດ ແລະ ການແຈ້ງເສຍພາສີ ແມ່ນຖືເປັນຕຳແໜ່ງທີ່ມີຄວາມສາມາດລະດັບກາງ. ການຄາດຄະເນຄ່າໃຊ້ຈ່າຍຂອງຕຳແໜ່ງເຫຼົ່ານີ້ ແມ່ນອີງຕາມຄ່າສະເລ່ຍຂອງແຮງງານຂັ້ນຕ່ຳ ແລະ ແຮງງານໃນຂະແໜງບໍລິການທີ່ມີຄວາມສາມາດລະດັບກາງ.

ການນຳໃຊ້ຄ່າແຮງງານທີ່ສະໜອງໃຫ້ໂດຍລັດຖະບານ ເຮັດໃຫ້ພະນັກງານຄົນໜຶ່ງໄດ້ລາຍຮັບ ຕໍ່ ເດືອນແມ່ນ 1.8 ລ້ານກີບ. ຖ້າມື້ເຮັດວຽກສະເລ່ຍຕໍ່ເດືອນແມ່ນ 21-22 ວັນ ສາມາດຄິດໄລ່ເປັນລາຍຮັບ ຕໍ່ ວັນລັດຖະການປະມານ 85,000 ກີບ ສຳລັບຄ່າແຮງພະນັກງານໂດຍກົງ.

### ຕາຕະລາງ 12: ຄ່າແຮງງານທັງໝົດ

| | ວັນ | ຄ່າແຮງງານ | ມູນຄ່າທັງໝົດ (ລ້ານ ກີບ) |
|---|---:|---:|---:|
| **ລວມທັງໝົດ** | 7,239 | 85,000 | 615.315 |

ແຫຼ່ງທີ່ມາ: ການຄິດໄລ່ຂອງ EMC

ສະນັ້ນ, ລວມຄ່າທຳນຽມ ແລະ ຄ່າແຮງງານ ແມ່ນຢູ່ລະຫວ່າງ 1 ພັນລ້ານ ຫາ 2.2 ພັນລ້ານກີບ.

### ຕາຕະລາງ 13: ຄ່າໃຊ້ຈ່າຍທັງໝົດ

| | Cost (m LAK) |
|---|---:|
| ຄ່າທຳນຽມທາງການ | 463.02-1,623.8 |
| ຄ່າແຮງງານ | 615.315 |
| **ມູນຄ່າທັງໝົດ** | **1,078.3-2,239.1** |

ແຫຼ່ງທີ່ມາ: ການຄິດໄລ່ຂອງ EMC

ຄ່າໃຊ້ຈ່າຍອື່ນໆທີ່ບໍ່ໄດ້ຖືກປະເມີນໃນຄັ້ງນີ້ ລວມມີ:

- ແຮງຈູງໃຈເພີ່ມເຕີມ ໃນການລັກລອບນຳເຂົ້າ;
- ທຸລະກິດໃນ ສປປ ລາວ ມີທ່າແຮງໃນການແຂ່ງຂັນກັບສາກົນຕ່ຳ ເນື່ອງຈາກລາຄາຂອງສິນຄ້າສູງ. ພ້ອມນີ້, ຍັງມີສິ່ງກີດຂວາງໃຫ້ແກ່ການລົງທຶນສາກົນ;
- ການສູນເສຍປະສິດທິພາບທາງເສດຖະກິດ ແລະ ການບິດເບືອນອື່ນໆ ເນື່ອງຈາກລາຄາຂອງສິນຄ້າສູງ.

### 4.7.5 ສະຫຼຸບ ແລະ ຂໍ້ສະເໜີປັບປຸງ ການຫຼຸດຜ່ອນຄວາມສ່ຽງ

ໂດຍລວມແລ້ວ, ລະບອບມາດຕະການ NTMs ໃນປະຈຸບັນ ແມ່ນຖືກພິຈາລະນາວ່າບໍ່ມີປະສິດທິພາບ ຕາມວິທີການຫຼຸດຜ່ອນຄວາມສ່ຽງ. ທາງເລືອກອື່ນໃນການປັບປຸງລະບອບການຫຼຸດຜ່ອນຄວາມສ່ຽງ ປະກອບມີ:

1. ໃບອະນຸຍາດນຳເຂົ້າ ຄວນຖືກລຶບລ້າງສຳລັບທຸລະກິດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດແລ້ວ ແລະ/ຫຼື ສິນຄ້າທີ່ໄດ້ຮັບການຈົດທະບຽນຜະລິດຕະພັນ.
2. ຄ່າທຳນຽມທີ່ກ່ຽວຂ້ອງກັບມາດຕະການ NTMs ຄວນໃຫ້ສາມາດຊຳລະຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ໂດຍການໂອນທາງທະນາຄານ ຫຼື ບັດເດບິດ (Debit card).
3. ຜູ້ຄ້າຄວນນຳໃຊ້ ລະບົບ LNSW ເພື່ອສະເໜີຂໍໃບອະນຸຍາດນຳເຂົ້າ. ທັງນີ້ ກໍ່ເພື່ອຫຼີກລ້ຽງໂອກາດໃນການຮຽກເກັບຄ່າທຳນຽມທີ່ບໍ່ເປັນທາງການ ແລະ ເຮັດໃຫ້ຜູ້ຄ້າປະຢັດເວລາໃນການຂໍໃບອະນຸຍາດນຳເຂົ້າ.
4. ເຈົ້າໜ້າທີ່ຕາມດ່ານຊາຍແດນຄວນເກັບຄ່າທຳນຽມທີ່ໄດ້ລະບຸໃນດຳລັດຂອງປະທານປະເທດ ເລກທີ 003/ປທ ເທົ່ານັ້ນ. ອັດຕາຄ່າທຳນຽມຕ່າງໆ ຄວນມີການເຜີຍແຜ່ໃຫ້ສາທາລະນະຊົນຮັບຮູ້ຕາມດ່ານຊາຍແດນຕ່າງ ແລະ ເປັນລະບົບອອນລາຍ ເພື່ອໃຫ້ບັນດາຜູ້ຄ້າສາມາດຮັບຮູ້ເຖິງອັດຕາຄ່າທຳນຽມທີ່ເໝາະສົມ.

5. ຂະແໜງພາສີ ຄວນປະຕິບັດລະບຽບຢ່າງເຂັ້ງຄັດ ເຊິ່ງບັນດາຜູ້ຄ້າທີ່ບໍ່ປະຕິບັດຕາມຂະບວນການຂອງມາດຕະການ NTMs ຈະບໍ່ໄດ້ຮັບອະນຸຍາດນຳເຂົ້າສິນຄ້າ. ເຖິງແມ່ນວ່າ, ຂະແໜງການອື່ນໆ ທີ່ປະຈຳຢູ່ດ່ານຊາຍແດນ ປະຕິບັດບັນດາລະບຽບການທັງໝົດຢ່າງເຂັ້ມງວດ, ມາດຕະການ NTMs ເຫຼົ່ານີ້ຈະບໍ່ມີຜົນກະທົບຫຍັງເລີຍ ຖ້າຫາກຂະແໜງພາສີ ບໍ່ບັງຄັບໃຊ້ລະບຽບການດັ່ງກ່າວ ເພາະເປັນຂະແໜງການທີ່ເປັນຂອດສຸດທ້າຍ ກ່ອນການປ່ອຍສິນຄ້າເຂົ້າມາໃນ ສປປ ລາວ.
6. ທັງລັດຖະບານ ແລະ ຜູ້ຄ້າ ສະແດງຄວາມບໍ່ເພິ່ງພໍໃຈ ກັບ ສິນຄ້າບາງປະເພດ ທີ່ຍັງບໍ່ທັນມີຄວາມຊັດເຈນວ່າ ກົມໃດສິດອຳນາດໃນການຄຸ້ມຄອງ ແລະ ຍັງແນະນຳອີກວ່າ ການຄຸ້ມຄອງດັ່ງກ່າວ ຄວນໄດ້ຮັບການເຜີຍແຜ່ສູ່ສາທາລະນະຊົນຢ່າງກວ້າງຂວາງ. ພ້ອມນີ້, ມາດຕະການ NTMs ຄວນຖືກປັບປຸງໃໝ່ ເພື່ອມອບຄວາມຮັບຜິດຊອບໃຫ້ກັບກົມທີ່ເໝາະສົມທີ່ສຸດໃນການຄຸ້ມຄອງສິນຄ້າຢ່າງຊັດເຈນ.

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ A: ບັນດາກົດໝາຍ ແລະ ລະບຽບການທີ່ຕິດພັນກຸ່ມມາດຕະການ NTMs

1. ດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ເລກທີ. 230/ລບ, ລົງວັນທີ 04 ມິຖຸນາ 2012
2. ຄຳສັ່ງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການກວດກາ ແລະ ຄຸ້ມຄອງ ຄຸນະພາບອາຫານສັດ ເລກທີ 0369/ກປ, ລົງວັນທີ 6 ພຶດສະພາ 2005

## ເອກະສານຊ້ອນທ້າຍ B: ລາຍຊື່ຂະແໜງການທີ່ຖືກສໍາພາດ

| ອົງກອນ/ຂະແໜງ | ສະຖານທີ່ |
|---|---|
| ກົມລ້ຽງສັດ ແລະ ການປະມົງ | ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ |
| ຂະແໜງລ້ຽງສັດ ແລະ ການປະມົງ | ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ |
| ໜ່ວຍງານສັດຕະວະແພດ | ດ່ານສາກົນຂົວມິດຕະພາບ 1, ນະຄອນຫຼວງວຽງຈັນ |
| ຂະແໜງລ້ຽງສັດ ແລະ ການປະມົງ | ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງນ້ຳທາ |
| ຂະແໜງລ້ຽງສັດ ແລະ ການປະມົງ | ພະແນກກະສິກຳ ແລະ ປ່າໄມ້ ແຂວງຄຳມ່ວນ |
| ໜ່ວຍງານສັດຕະວະແພດ | ດ່ານສາກົນ ບໍ່ເຕນ, ແຂວງຫຼວງນ້ຳທາ |
| ໜ່ວຍງານສັດຕະວະແພດ | ດ່ານສາກົນຂົວມິດຕະພາບ 3, ແຂວງຄຳມ່ວນ |
| ຂະແໜງລ້ຽງສັດ ແລະ ການປະມົງ | ພະແນກກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ |
| ຂະແໜງລ້ຽງສັດ ແລະ ການປະມົງ | ພະແນກກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ |
| ໜ່ວຍງານກັກກັນສັດ | ດ່ານສາກົນແດນສະຫວັນ, ແຂວງ ສະຫວັນນະເຂດ |
| ໜ່ວຍງານກັກກັນສັດ | ດ່ານສາກົນວັງເຕົ່າ, ແຂວງຈຳປາສັກ |
| ຜູ້ຄ້າ-ກິດຈະການ ກ່ຽວກັບສັດ | ແຂວງ ສະຫວັນນະເຂດ |
| ຜູ້ຄ້າ-ກິດຈະການ ກ່ຽວກັບສັດ | ແຂວງ ຈຳປາສັກ |
| ຜູ້ຄ້າ-ກິດຈະການ ກ່ຽວກັບສັດ | ແຂວງ ຫຼວງນ້ຳທາ |
| ຜູ້ຄ້າ-ກິດຈະການ ກ່ຽວກັບສັດ | ແຂວງ ຄຳມ່ວນ |
| ຜູ້ຄ້າ-ກິດຈະການ ກ່ຽວກັບສັດ | ນະຄອນຫຼວງວຽງຈັນ |

## ເອກະສານຊ້ອນທ້າຍ C: ລາຍການ ແລະ ລະຫັດສິນຄ້າ (HS)

### *ຜະລິດຕະພັນສິນຄ້າ ກ່ຽວກັບສັດ (ໄກ່/ໝູ)*

| ລະຫັດ HS | ຄຳອະທິບາຍ |
|---|---|
| 0103910000 | - ອື່ນໆ: - - ນ້ຳໜັກໜ້ອຍກວ່າ 50 ກິໂລກຣາມ |
| 0103920000 | - ອື່ນໆ: - - ນ້ຳໜັກ 50 ກິໂລກຣາມ ຫຼື ຫຼາຍກວ່າ |
| 0105111000 | - ນ້ຳໜັກບໍ່ເກີນ 185 ກຣາມ: - - ສັດປີກຊະນິດແກລລັສ ໂດເມສຕິກັສ: - - - ສັດປີກສຳລັບເຮັດພັນ |
| 0105119000 | - ນ້ຳໜັກບໍ່ເກີນ 185 ກຣາມ: - - ສັດປີກຊະນິດແກລລັສ ໂດເມສຕິກັສ: - - - ອື່ນໆ |
| 0105941000 | - ອື່ນໆ: - - ສັດປີກຊະນິດແກລລັສ ໂດເມສຕິກັສ: - - - ສັດປີກສຳລັບເຮັດພັນ, ນອກຈາກໄກ່ຕີ |
| 0105944000 | - ອື່ນໆ: - - ສັດປີກຊະນິດແກລລັສ ໂດເມສຕິກັສ: - - - ໄກ່ຕີ |
| 0105949100 | - ອື່ນໆ: - - ສັດປີກຊະນິດແກລລັສ ໂດເມສຕິກັສ: - - - ອື່ນໆ: - - - - ທີ່ມີນ້ຳໜັກບໍ່ເກີນ 2 ກິໂລກຣາມ |

| | |
|---|---|
| 0105949900 | - ອື່ນໆ: - - ສັດປີກຊະນິດແກລລັສ ໂດເມສຕິກັສ: - - - ອື່ນໆ: - - - - ອື່ນໆ |
| 0106190000 | - ສັດເລືອດອຸ່ນທີ່ລ້ຽງລູກດ້ວຍນົມ: - - ອື່ນໆ |
| 0407110000 | - ໄຂ່ສຳລັບການຟັກ, ລວມເຖິງການເພາະພັນ: - - ໄຂ່ສັດປີກຊະນິດແກລລັສ ໂດເມສຕິກັສ |
| 0407210000 | - ໄຂ່ສົດອື່ນໆ: - - ໄຂ່ສັດປີກຊະນິດແກລລັສ ໂດເມສຕິກັສ |
| 0407901000 | - ອື່ນໆ: - - ໄຂ່ສັດປີກຊະນິດແກລລັສ ໂດເມສຕິກັສ |
| 0502100000 | - ຂົນໝູບ້ານ ຫຼື ຂົນໝູປ່າ ແລະ ເສດຂອງຂົນໝູດັ່ງກ່າວ |
| 0502900000 | - ອື່ນໆ |

## *ອາຫານສັດ*

| ລະຫັດ HS | ຄຳອະທິບາຍ |
|---|---|
| 1006401000 | - ເຂົ້າປາຍ: - - ເໝາະສໍາລັບການລ້ຽງສັດ |
| 1208100000 | - ທີ່ເຮັດຈາກຖົ່ວເຫຼືອງ |
| 1208900000 | - ອື່ນໆ |
| 1212910000 | - ອື່ນໆ: - - ຫົວຜັກກາດຫວານທີ່ໃຫ້ນ້ຳຕານ |
| 1212939000 | - ອື່ນໆ: - - ຕົ້ນອ້ອຍ: - - - ອື່ນໆ |
| 1213000000 | ເຟືອງ ແລະ ກາກຂອງທັນຍາພືດ, ທີ່ບໍ່ທັນຕົບແຕ່ງ, ຈະຫັ່ນ, ບົດ, ອັດ ຫຼື ເຮັດໃຫ້ເກາະກ້ອນໃນຮູບເມັດກົມແບບເພລເລດທ໌ ຫຼື ບໍ່ກໍ່ຕາມ. |
| 1214100000 | - ຫຍ້າລ້ຽງສັດທີ່ເຮັດເປັນແປ້ງຫຍາບ ແລະ ເຮັດເກາະກ້ອນເປັນຮູບແຜ່ນບາງ |
| 1214900000 | - ອື່ນໆ |
| 1204000000 | ເມັດປໍປ່ານ, ຈະບົດແຕກແລ້ວ ຫຼື ບໍ່ກໍ່ຕາມ |
| 1205100000 | - ເມັດເຣບຫຼື ໂຄລຊາທີ່ມີກົດອີຣູຊິກຕ່ຳ |
| 1205900000 | - ອື່ນໆ |
| 1206000000 | ໃນຄວາມໝາຍຂອງລະຫັດເຄົ້າ 12.12 ຄຳວ່າ ແກ່ນດອກຕະວັນ, ຈະບົດແຕກແລ້ວ ຫຼື ບໍ່ກໍ່ຕາມ |
| 1207101000 | - ແກ່ນໝາກປາມ ແລະ ເນື້ອໃນແກ່ນໝາກປາມ - - ເໝາະສໍາລັບການປູກຝັງ |
| 1207102000 | - ແກ່ນໝາກປາມ ແລະ ເນື້ອໃນແກ່ນໝາກປາມ - - ບໍ່ເໝາະສຳລັບການປູກຝັງ |
| 1207300000 | - ເມັດລະຫຸ່ງ |
| 1207401000 | - ແກ່ນໝາກງາ: - - ທີ່ບໍລິໂພກໄດ້ |
| 1207994000 | - ອື່ນໆ: - - ອື່ນໆ: - - - ເມັດອິລລິພີ(ອິລລິພີນັດທ໌) |
| 1207999000 | - ອື່ນໆ: - - ອື່ນໆ: - - - ອື່ນໆ |
| 1203000000 | ນວນໝາກພ້າວແຫ້ງ |
| 1802000000 | ເປືອກນອກ, ເປືອກໃນ, ເຍື່ອຫຸ້ມ (ເຍື່ອໃນ) ແລະ ເສດອື່ນໆ ຂອງໂກໂກ້. |
| 2301100000 | - ແປ້ງ, ຜົງ ແລະ ສິ່ງເກາະກ້ອນໃນຮູບຂອງກ້ອນກົມ, ຂອງຊີ້ນສັດ, ສ່ວນອື່ນຂອງ ສັດ, ກາກ ມັນສັດທີ່ຈືນເອົານ້ຳອອກແລ້ວ |
| 2301201000 | - ແປ້ງ, ຜົງ ແລະ ສິ່ງເກາະກ້ອນໃນຮູບຂອງກ້ອນກົມ, ຂອງປາ ຫຼື ສັດນ້ຳຈຳພວກຄຣັສຕາ ຊຽນ, ໂມລລັສ໌ ຫຼື ສັດນ້ຳຈຳພວກທີ່ບໍ່ມີກະດູກສັນຫຼັງອື່ນໆ: - - ທີ່ໄດ້ຈາກປາ, ທີ່ມີໂປຣຕີນນ້ອຍກວ່າ 60% ໂດຍນ້ຳໜັກ |
| 2301202000 | - ແປ້ງ, ຜົງ ແລະ ສິ່ງເກາະກ້ອນໃນຮູບຂອງກ້ອນກົມ, ຂອງປາ ຫຼື ສັດນ້ຳຈຳພວກຄຣັສຕາ ຊຽນ, ໂມລລັສ໌ ຫຼື ສັດນ້ຳຈຳພວກທີ່ບໍ່ມີກະດູກສັນຫຼັງອື່ນໆ: - - ທີ່ໄດ້ຈາກປາ, ທີ່ມີໂປຣຕີນ 60 % ຫຼື ຫຼາຍກວ່າ ໂດຍນ້ຳໜັກ |
| 2301209000 | - ແປ້ງ, ຜົງ ແລະ ສິ່ງເກາະກ້ອນໃນຮູບຂອງກ້ອນກົມ, ຂອງປາ ຫຼື ສັດນ້ຳຈຳພວກຄຣັສຕາ ຊຽນ, ໂມລລັສ໌ ຫຼື ສັດນ້ຳຈຳພວກທີ່ບໍ່ມີກະດູກສັນຫຼັງອື່ນໆ: - - ອື່ນໆ |
| 2302100000 | - ທີ່ໄດ້ຈາກເຂົ້າໂພດ (ສາລີ) |

| | |
|---|---|
| 2302300000 | - ທີ່ໄດ້ຈາກເຂົ້າວີດ |
| 2302401000 | - ທີ່ໄດ້ຈາກທັນຍາພືດອື່ນໆ: - - ທີ່ໄດ້ຈາກເຂົ້າ |
| 2302409000 | - ທີ່ໄດ້ຈາກທັນຍາພືດອື່ນໆ: - - ອື່ນໆ |
| 2302500000 | - ທີ່ໄດ້ຈາກພືດຕະກຸນຖົ່ວຕ່າງໆ |
| 2303101000 | - ກາກ ແລະ ເສດຈາກການຜະລິດສຕາຣຈ໌ ແລະ ກາກທີ່ຄ້າຍຄືກັນ: - - ທີ່ໄດ້ຈາກມັນຕົ້ນ ຫຼື ສາຄູ |
| 2303109000 | - ກາກ ແລະ ເສດຈາກການຜະລິດສຕາຣຈ໌ ແລະ ກາກທີ່ຄ້າຍຄືກັນ: - - ອື່ນໆ |
| 2303200000 | - ກາກຫົວຜັກກາດຫວານ, ກາກອ້ອຍ ແລະ ເສດອື່ນໆ ຈາກການຜະລິດນ້ຳຕານ |
| 2303300000 | - ຂີ້ຕະກອນ ແລະ ເສດຈາກການຜະລິດເບຍ ຫຼື ເຫຼົ້າ |
| 2304001000 | - ແປ້ງຖົ່ວເຫຼືອງທີ່ເອົາໄຂມັນອອກ, ເໝາະສຳລັບການບໍລິໂພກຂອງຄົນ |
| 2304009000 | - ອື່ນໆ |
| 2305000000 | ກາກຖົ່ວດິນ ແລະ ກາກແຂງອື່ນໆ, ຈະບົດ ຫຼື ເກາະກັນໃນຮູບຂອງກ້ອນກົມ ຫຼື ບໍ່ກໍ່ຕາມ, ທີ່ໄດ້ຈາກການສະກັດນ້ຳມັນໝາກຖົ່ວດິນ. |
| 2306100000 | - ທີ່ໄດ້ຈາກແກ່ນຝ້າຍ |
| 2306200000 | - ທີ່ໄດ້ຈາກແກ່ນປໍ |
| 2306300000 | - ທີ່ໄດ້ຈາກແກ່ນດອກຕາເວັນ |
| 2306411000 | - ທີ່ໄດ້ຈາກແກ່ນເຣບ ຫຼື ແກ່ນໂຄຣຊາ: - - ທີ່ໄດ້ຈາກແກ່ນເຣບ ຫຼື ແກ່ນໂຄລຊາທີ່ມີກົດອີຣູຊິກຕ່ຳ: - - - ທີ່ໄດ້ຈາກແກ່ນເຣບ ທີ່ມີກົດອີຣູຊິກຕ່ຳ |
| 2306412000 | - ທີ່ໄດ້ຈາກແກ່ນເຣບ ຫຼື ແກ່ນໂຄຣຊາ: - - ທີ່ໄດ້ຈາກແກ່ນເຣບ ຫຼື ແກ່ນໂຄລຊາທີ່ມີກົດອີຣູຊິກຕ່ຳ: - - - ທີ່ໄດ້ຈາກແກ່ນໂຄລຊາ ທີ່ມີກົດອີຣູຊິກຕ່ຳ |
| 2306491000 | - ທີ່ໄດ້ຈາກແກ່ນເຣບ ຫຼື ແກ່ນໂຄຣຊາ: - - ອື່ນໆ: - - - ທີ່ໄດ້ຈາກແກ່ນເຣບອື່ນໆ |
| 2306492000 | - ທີ່ໄດ້ຈາກແກ່ນເຣບ ຫຼື ແກ່ນໂຄຣຊາ: - - ອື່ນໆ: - - - ທີ່ໄດ້ຈາກແກ່ນໂຄລຊາອື່ນໆ |
| 2306500000 | - ທີ່ໄດ້ຈາກໝາກພ້າວ ຫຼື ເນື້ອໝາກພ້າວ |
| 2306600000 | - ທີ່ໄດ້ຈາກໝາກປາມ ແລະ ເນື້ອໃນເມັດຂອງປາມ |
| 2306901000 | - ອື່ນໆ: - - ທີ່ໄດ້ຈາກເຂົ້າໂພດ (ສາລີ) |
| 2306909000 | - ອື່ນໆ: - - ອື່ນໆ |
| 2307000000 | ຕະກອນໄດ້ຈາກການໝັກ ແລະ ບົ່ມເຫຼົ້າໄວນ໌; ຕະກອນລະບາຍເຫຼົ້າໄວນ໌.. |
| 2308000000 | ວັດຖຸ ແລະ ເສດຈາກພືດ, ກາກ ແລະ ຜະລິດຕະພັນສຳຮອງຈາກພືດ, ຈະເກາະກັນໃນຮູບກ້ອນກົມ ຫຼື ບໍ່ກໍ່ຕາມ, ຊະນິດທີ່ໃຊ້ສຳລັບເປັນອາຫານສັດ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ບ່ອນອື່ນໆ. |
| 2309101000 | - ອາຫານສຳລັບໝາ ຫຼື ແມວ, ເຮັດຂຶ້ນເພື່ອການຂາຍຍ່ອຍ: - - ທີ່ມີຊີ້ນລວມຢູ່ນຳ |
| 2309109000 | - ອາຫານສຳລັບໝາ ຫຼື ແມວ, ເຮັດຂຶ້ນເພື່ອການຂາຍຍ່ອຍ: - - ອື່ນໆ |
| 2309901100 | - ອື່ນໆ: - - ອາຫານສຳເລັດຮູບ: - - - ຊະນິດທີ່ເໝາະສຳລັບລ້ຽງສັດປີກບ້ານ |
| 2309901200 | - ອື່ນໆ: - - ອາຫານສຳເລັດຮູບ: - - - ຊະນິດທີ່ເໝາະສຳລັບລ້ຽງໝູ |
| 2309901300 | - ອື່ນໆ: - - ອາຫານສຳເລັດຮູບ: - - - ຊະນິດທີ່ເໝາະສຳລັບລ້ຽງກຸ້ງ |
| 2309901400 | - ອື່ນໆ: - - ອາຫານສຳເລັດຮູບ: - - - ຊະນິດທີ່ເໝາະສຳລັບລ້ຽງລູກດ້ວຍນ້ຳນົມຈຳພວກລີງ |
| 2309901900 | - ອື່ນໆ: - - ອາຫານສຳເລັດຮູບ: - - - ອື່ນໆ |
| 2309902000 | - ອື່ນໆ: - - ອາຫານປະສົມ, ອາຫານເສີມ, ອາຫານປະກອບ |
| 2309903000 | - ອື່ນໆ: - - ອື່ນໆ ທີ່ມີຊີ້ນປະສົມຢູ່ນຳ |
| 2309909000 | - ອື່ນໆ: - - ອື່ນໆ |